ພະຍາກອນ ວຽງຈັນ
24–31°C
ວັນຈັນ 19/10 · ເມກບາງສ່ວນ

ມະຫາສານ

ລາຍວັນ ◆ MAHAXAN DAILY ◆ mahaxan.com

ໂຄສະນາ
ພື້ນທີ່ໂຄສະນາ
44 × 25 ມມ · ຕິດຕໍ່ WhatsApp 020 5888 6182

◆ **ຂ່າວພາຍໃນ** · 09:56 ໂມງ · ອ່ານ 4 ຄັ້ງ

ພະນະທ່ານ ທອງລຸນ ສີສຸລິດ ປະທານປະເທດ ແຫ່ງ ສປປ ລາວ ສຳເລັດການຢ້ຽມຢາມ ສາທາລະນະລັດ ອາແຊັກໄບຊານ ຢ່າງເປັນທາງການ



ພະນະທ່ານ ທອງລຸນ ສີສຸລິດ, ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ນຳພາຄະນະຜູ້ແທນຂັ້ນສູງຂອງ ສປປ ລາວ ເດີນທາງ ຢ້ຽມຢາມ ສາທາລະນະລັດ ອາແຊັກໄບຊານ ຢ່າງເປັນ ທາງການ ໃນວັນທີ 13-15 ຕຸລາ 2026 ໂດຍຕອບ ສະໜອງຕາມຄຳ ເຊື້ອເຊີນຂອງ ພະນະທ່ານ ອິວຮາມ ອາລີເຢບ (Ilham Aliyev), ປະທານາທິບໍດີ ແຫ່ງ ສາທາລະນະລັດ ອາແຊັກໄບຊານ.

ຕອນເຊົ້າຂອງວັນທີ 13 ຕຸລາ 2026 ທີ່ ທຳນຽບປະທານາທິບໍດີ ໄດ້ມີພິທີຕ້ອນຮັບຢ່າງເປັນ

ຕໍ່ໜ້າ 2

◆ **ຂ່າວຕ່າງປະເທດ** · 15:14 ໂມງ

ເຕືອນ ປາອາລີເກເຕີ ໄຂ່ມີພິດ ຫ້າມນຳມາກິນເດັດຂາດ



ເຕືອນໄພ ຈາກປະເທດເພື່ອນບ້ານ ປາອາລີເກເຕີຫຼາຍ ກວ່າ 300 ໂຕ ຫຼຸດອອກຈາກໜອງລ້ຽງຫຼັງເກີດນ້ຳຖ້ວມ ພ້ອມເຕືອນປະຊາຊົນຢ່າຈັບມາກິນ ໂດຍສະເພາະໄຂ່ປາ ຫຼັງ ມີການແຍ່ງປັນຂໍ້ຄວາມເຕືອນວ່າອາດມີສານພິດທີ່ສິ່ງຜົນ ກະທົບຕໍ່ລະບົບປະສາດ ແລະຫົວໃຈ.

ຕາມລາຍງານຂ່າວຈາກປະເທດໄທ ເຫດການເກີດຂຶ້ນ ທີ່ບຶງສຳລານ ຕຳບົນສາລາແດງ ອຳເພີບາງນ້ຳປຽວ ແຂວງສະ ເຊີງເທົ່າ ຫຼັງຈາກນ້ຳຖ້ວມເຮັດໃຫ້ປາອັລລິເກເຕີຫຼາຍກວ່າ 300 ໂຕ ຫຼຸດອອກຈາກໜອງລ້ຽງ. ປາຊະນິດນີ້ມີປາກຍາວ

ຕໍ່ໜ້າ 2

ໃນສະບັບນີ້

2 ຂ່າວພາຍໃນ
8 ສາລະໜ້າຮູ້
9 ຂ່າວຕ່າງປະເທດ
14 ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ
15 ແຈ້ງການ
16 ກິລາ



◆ **ແຈ້ງການ** · 10:51 ໂມງ

ແຈ້ງການມອດໄຟ ວັນທີ 17,18/10/2026 ໃນຂົງເຂດບ້ານ ດົງປ່...

ອ່ານໜ້າ 15 ▸



◆ **ແຈ້ງການ** · 11:00 ໂມງ

ແຈ້ງການມອດໄຟ ວັນທີ 18/10/2026 ໃນ ຂົງເຂດບ້ານ ໂພນ...

ອ່ານໜ້າ 15 ▸



◆ **ຂ່າວພາຍໃນ** · 16:41 ໂມງ

ທ່ານ ສະເຫຼີມໄຊ ກົມມະສິດ ນາຍົກລັດຖະມົນຕີ ຕ້ອນຮັ...

ອ່ານໜ້າ 2 ▸

ໂຄສະນາ
ໃຫ້ແບຣນຂອງທ່ານ ຢູ່ໜ້າ 1 ທຸກເຊົ້າ
ໂຄສະນາໃນ ມະຫາສານ ລາຍວັນ — ໜັງສືພິມ PDF ທີ່ຄົນລາວດາວໂຫຼດ ແລະ ຮັບທາງອີເມວ ທຸກເຊົ້າ
WhatsApp 020 5888 6182

ພະນະທ່ານ ທອງລຸນ ສີສຸລິດ ປະທານປະເທດ ແຫ່ງ ສປປ ລາວ ... (ຕໍ່ຈາກໜ້າ 1)

ທາງການ ຊຶ່ງຈັດຂຶ້ນຢ່າງຍິ່ງໃຫຍ່ ແລະ ສົມກຽດ ໃຫ້ແກ່ ພະນະທ່ານ ທອງລຸນ ສີສຸລິດ ປະທານປະເທດ ແຫ່ງ ສປປ ລາວ ພ້ອມດ້ວຍຄະນະ ໂດຍການຕ້ອນຮັບອັນອົບອຸ່ນຂອງ ພະນະທ່ານ ອິວຮາມ ອາລີເຢບ, ປະທານາທິບໍດີ ແຫ່ງ ສ. ອາແຊັກ ໄບຊານ ພ້ອມດ້ວຍຄະນະ.

ຈາກນັ້ນ, ໄດ້ມີການພົບປະສອງຝ່າຍຢ່າງເປັນທາງການ ລະຫວ່າງ ສອງປະມຸກລັດ ສປປ ລາວ ແລະ ສ. ອາແຊັກ ໄບຊານ. ໃນໂອກາດນີ້, ພະນະທ່ານ ອິວຮາມ ອາລີເຢບ, ປະທານາທິບໍດີ ແຫ່ງ ສ. ອາແຊັກ ໄບຊານ ໄດ້ສະແດງຄວາມຍິນດີຕ້ອນຮັບອັນອົບອຸ່ນ ແລະ ຕີລາຄາສູງ ຕໍ່ການຢ້ຽມຢາມ ອາແຊັກ ໄບຊານ ຢ່າງເປັນທາງການຂອງຄະນະຜູ້ແທນຂັ້ນສູງຂອງ ສປປ ລາວ ໃນຄັ້ງນີ້ ຊຶ່ງພະນະທ່ານ ທອງລຸນ ສີສຸລິດ, ປະທານປະເທດ ແຫ່ງ ສປປ ລາວ ກໍໄດ້ສະແດງຄວາມປິຕິຍິນດີ ແລະ ຂອບໃຈຢ່າງຈິງໃຈ ຕໍ່ການຕ້ອນຮັບອັນອົບອຸ່ນດັ່ງກ່າວ. ການຢ້ຽມຢາມ ສ. ອາແຊັກ ໄບຊານຢ່າງເປັນທາງການໃນຄັ້ງນີ້ ເປັນການຢ້ຽມຢາມຄັ້ງທຳອິດໃນຂັ້ນປະມຸກລັດຂອງ ສປປ ລາວ ຊຶ່ງຖືເປັນຂີດໝາຍໃໝ່ອັນສຳຄັນໃນການຮັດແໜ້ນສາຍພົວພັນມິດຕະພາບ ແລະ ການຮ່ວມມືໃນໄລຍະໃໝ່ ບົນພື້ນຖານມູນເຊື້ອແຫ່ງ ສາຍພົວພັນມິດຕະພາບ ທີ່ມີມາແຕ່ດົນນານ ລະຫວ່າງ ສອງປະເທດ ໃນສະໄໝສະຫະພາບໂຊວຽດ ກໍຄືນັບແຕ່ການສ້າງຕັ້ງສາຍພົວພັນການທູດໃນປີ 1995 ປັນຕົ້ນມາ ໃຫ້ແໜ້ນແຟ້ນຍິ່ງໆຂຶ້ນໃນຊຸມປີຕໍ່ໜ້າ.

ໃນການພົບປະ, ສອງຝ່າຍ ໄດ້ປຶກສາຫາລື ແລະ ທົບທວນຄືນການພົວພັນຮ່ວມມື ລະຫວ່າງ ສອງປະເທດ ໃນໄລຍະຜ່ານມາ ໂດຍໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງສອງປະເທດ ບົນພື້ນຖານການເຄົາລົບນັບຖື ແລະ ໄວ້ເນື້ອເຊື່ອໃຈ ເຊິ່ງກັນ ແລະ ກັນ ຊຶ່ງໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ທັ້ງໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ. ສອງຝ່າຍ ໄດ້ແລກປ່ຽນຄຳຄິດເຫັນ ດ້ວຍບັນຍາກາດແຫ່ງໄມຕີຈິດມິດຕະພາບ ເພື່ອພ້ອມກັນສືບຕໍ່ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີລະຫວ່າງສອງປະເທດ. ສອງຝ່າຍ ເຫັນດີສືບຕໍ່ຊຸກຍູ້ການແລກປ່ຽນການຢ້ຽມຢາມ ເຊິ່ງກັນ ແລະ ກັນ ຂອງການນຳຂັ້ນສູງ ແລະ ຂັ້ນຕ່າງໆ ໃຫ້ເປັນປົກກະຕິ; ຊຸກຍູ້ສົ່ງເສີມການພົວພັນຮ່ວມມືສອງຝ່າຍໃນຂົງເຂດຕ່າງໆ ເປັນຕົ້ນແມ່ນ ທາງດ້ານ ການເມືອງ, ເສດຖະກິດ, ການຄ້າ, ການລົງທຶນ, ການຂົນສົ່ງ, ພະລັງງານ, ການສຶກສາ, ວັດທະນະທຳ-ສັງຄົມ, ວຽກງານກະສິກຳ ລວມເຖິງການສະໜັບສະໜູນເຊິ່ງກັນ ແລະ ກັນ ໃນເວທີພາກພື້ນ ແລະ ສາກົນ ໂດຍສະເພາະໃນຂອບ ສປຊ ແລະ ອື່ນໆ.

ໃນໂອກາດດຽວກັນນີ້, ພະນະທ່ານ ທອງລຸນ ສີສຸລິດ, ປະທານປະເທດ ແຫ່ງ ສປປ ລາວ ຍັງໄດ້ຕາງໜ້າໃຫ້ ລັດຖະບານ ແລະ ປະຊາຊົນລາວ ສະແດງຄວາມຮູ້ບຸນຄຸນຢ່າງສູງ ມາຍັງ ລັດຖະບານ ແລະ ປະຊາຊົນ ອາແຊັກ ໄບຊານ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອ ສປປ ລາວ ໂດຍສະເພາະ ແມ່ນການສ້າງບຸກຄະລາກອນ ຕັ້ງແຕ່ສະໄໝສະຫະພາບໂຊວຽດ ຊຶ່ງໄດ້ກາຍເປັນກຳລັງແຮງອັນສຳຄັນໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຂອງ ສປປ ລາວ ໃນປັດຈຸບັນ. ພ້ອມດຽວກັນນັ້ນ, ກໍໄດ້ເຊື້ອເຊີນ ພະນະທ່ານ ອິວຮາມ ອາລີເຢບ, ປະທານາທິບໍດີ ແຫ່ງ ສາທາລະນະລັດ ອາແຊັກ ໄບຊານ ຢ້ຽມຢາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຢ່າງເປັນທາງການ ໃນປີ 2027 ຫຼື ໃນເວລາທີ່ສະດວກ.

ພາຍຫຼັງສຳເລັດການພົບປະສອງຝ່າຍ, ສອງປະມຸກລັດ ສປປ ລາວ ແລະ ສ. ອາແຊັກ ໄບຊານ ໄດ້ຮັບຮອງເອົາ ຖະແຫຼງການຮ່ວມ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ແລະ ສາທາລະນະລັດ ອາແຊັກ ໄບຊານ ພ້ອມທັງໄດ້ເປັນສັກຂີພິຍານໃນພິທີ ແລກປ່ຽນເອກະສານຮ່ວມມືຈຳນວນ 2 ສະບັບ ຄື: 1. ສັນຍາ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ແລະ ສາທາລະນະລັດ ອາແຊັກ ໄບຊານ ວ່າດ້ວຍ ການຍົກເວັ້ນວີຊາ ສຳລັບ ຜູ້ຖືໜັງສືຜ່ານແດນລັດຖະການ ແລະ 2. ບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ແລະ ສາທາລະນະລັດ ອາແຊັກ ໄບຊານ ວ່າດ້ວຍ ການຮ່ວມມືຂົງເຂດ ກະສິກຳ.

ໃນຕອນທ່ຽງຂອງວັນດຽວກັນ, ພະນະທ່ານ ອິວຮາມ ອາລີເຢບ, ປະທານາທິບໍດີ ແຫ່ງ ສ. ອາແຊັກ ໄບຊານ ຍັງໄດ້ເປັນເຈົ້າພາບຈັດງານລ້ຽງຮັບຮອງ ເປັນກຽດໃຫ້ແກ່ ພະນະທ່ານ ທອງລຸນ ສີສຸລິດ, ປະທານປະເທດ ແຫ່ງ ສປປ ລາວ ພ້ອມດ້ວຍຄະນະ ຢ່າງສົມກຽດ.

ໃນໂອກາດເຄື່ອນໄຫວຢ້ຽມຢາມ ສ. ອາແຊັກ ໄບຊານ ຢ່າງເປັນທາງການ ໃນຄັ້ງນີ້, ພະນະທ່ານ ທອງລຸນ ສີສຸລິດ, ປະທານປະເທດ ແຫ່ງ ສປປ ລາວ ຍັງໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ພະນະທ່ານ ອາລີ ອາຊາໂດບ (Ali Asadov), ນາຍົກລັດຖະມົນຕີ ແຫ່ງ ສ ອາແຊັກ ໄບຊານ ແລະ ພະນະທ່ານ ນາງ ຊາຮິບາ ກາຟາໂຣວາ (Sahiba Gafarova), ປະທານ ລັດຖະສະພາ ແຫ່ງ ສ. ອາແຊັກ ໄບຊານ. ນອກຈາກນີ້, ພະນະທ່ານ ທອງລຸນ ສີສຸລິດ ພ້ອມດ້ວຍຄະນະ ຍັງໄດ້ຢ້ຽມຊົມສະຖານທີ່ທາງປະຫວັດສາດ ແລະ ວັດທະນະທຳ ທີ່ສຳຄັນຂອງ ສ. ອາແຊັກ ໄບຊານ ຈຳນວນໜຶ່ງ. ພິເສດ, ພະນະທ່ານ ທອງລຸນ ສີສຸລິດ, ປະທານປະເທດ ແຫ່ງ ສປປ ລາວ ຍັງໄດ້ໄປຢ້ຽມຢາມມະຫາວິທະຍາໄລແຫ່ງລັດບາກູ, ສ. ອາແຊັກ ໄບຊານ ພ້ອມທັງໄດ້ໃຫ້ກຽດຂຶ້ນກ່າວບັນຍາຍ ກ່ຽວກັບ ປະຫວັດຄວາມເປັນມາຂອງການພົວພັນລະຫວ່າງ ສປປ ລາວ ແລະ ສ. ອາແຊັກ ໄບຊານ ຕໍ່ຄູອາຈານ-ນັກສຶກສາ ດ້ວຍບັນຍາກາດແຫ່ງໄມຕີຈິດມິດພະພາບ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈໃຫ້ຊາວໜຸ່ມຂອງສອງປະເທດ ໃນການສືບຕໍ່ເສີມຂະຫຍາຍສາຍພົວພັນອັນເປັນມູນເຊື້ອທີ່ດີງາມຂອງສອງປະເທດ ໃຫ້ຂະຫຍາຍຕົວໃນອະນາຄົດ.

ເຕືອນ ປາອາລິເກເຕ ໄຂ່ມີພິດ ຫ້າມນຳມາກິນເດັດຂາດ ... (ຕໍ່ຈາກໜ້າ 1)

ແຂ້ວແຫຼມ ແລະສາມາດເຕີບໃຫຍ່ໄດ້ເຖິງ 2–3 ແມັດ.

ຜູ້ໃຊ້ເຟສບຸກລາຍໜຶ່ງໄດ້ໂພສເຕືອນວ່າ ເຖິງແມ່ນປາຊະນິດນີ້ອາດບໍ່ເຂົ້າຫາຄົນກ່ອນ ແຕ່ສິ່ງທີ່ໜ້າກັງວົນແມ່ນການທີ່ປະຊາຊົນຈັບມາປຸງອາຫານ ໂດຍສະເພາະໄຂ່ປາ ເຊິ່ງໂພສດັ່ງກ່າວອ້າງວ່າ ອາດມີສານພິດທີ່ກະທົບຕໍ່ລະບົບປະສາດ ແລະຫົວໃຈ.

ທັງນີ້ ຂໍ້ມູນເລື່ອງຄວາມເປັນພິດຂອງໄຂ່ປາທີ່ຖືກກ່າວເຖິງ ຍັງຕ້ອງໄດ້ກວດສອບກັບແຫຼ່ງຂໍ້ມູນທາງວິຊາການ ຫຼືຜູ້ຊ່ຽວຊານກ່ອນນຳໄປອ້າງອີງເປັນຂໍ້ເທັດຈິງ. ປະຊາຊົນຄວນຫຼີກລ່ຽງການຈັບ ຫຼື ບໍລິໂພກປາແລະໄຂ່ປາທີ່ບໍ່ສາມາດລະບຸຊະນິດ ຫຼື ຢືນຢັນຄວາມປອດໄພໄດ້.

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ข่าวพายใน · 16:41 โมง · อ่าน 22 ถั้ง

ท่าน ສะเหຼิมไຊ ກົມมะสิด นายกลัดถะมนตี ต้อนรับการเข้าย้ำมนับของบัน ดาทูดอาซุน ปะจำ สปป ลาว



ในอันที่ 16 ตุลา 2026 ที่สำนักงานนายกลัดถะ มนตี, ท่าน ສะเหຼิมไຊ ກົມมะสิด กำมะการกิมการเมืองสูนกางพัก นายกลัดถะมนตี แห่ง สปป ลาว ได้ต้อนรับการเข้ายำมนับของบันดาทูดอาซุน ปะจำ สปป ลาว เพื่ออวยพอน และ สะแดงถอามชืมเชียในโอกาดที่ ท่าน ສะเหຼิมไຊ ກົມมะสิด ได้รับการเลือกตั้งดำลิงตำแหน่งเป้น นายกลัดถะมนตี แห่ง สปป ลาว.

ในการเข้ายำมนับถั้งนี้, ท่าน U Aung Ko เอกอักคะลัดถะทูด แห่ง สาทาละนะลัด สะทะ พาบ มงมา ปะจำ สปป ลาว, ในนามเป้นประทานกองปะชุมปึกสาทาลีอาซุน (ASEAN Consultative Meeting) ได้ตางหน้าบันดาทูดอาซุน สะแดงถอามยินดี และ ชืมเชียย่างจิงใจต่ำท่าน ສะเหຼิมไຊ ກົມมะสิด กำมะการกิมการเมืองสูนกางพัก นายกลัดถะมนตี แห่ง สปป ลาว ที่ได้รับการเลือกตั้งเป้น นา ยกลัดถะมนตี แห่ง สปป ลาว คินใหม่. การได้รับเลือกตั้งดำลิงตำแหน่งสำคันถั้งนี้ แม่นได้รับถอามเชื่อหมั้น และ ไอ้อางใจ จากพัก-ลัด และ ปะชาชิน และ เชื่อหมั้นว่าด้วยถอามรู้, ถอามสามาด, ปะสิบการ และ บันดาผินงานต่างๆ,ท่าน นายกลัดถะมนตี จะสืบต่ำนำพาลัดถะบาน และ ปะชาชิน ปะติบัดพาละกิดปึกปักรักสา และ สำงสาพัดทะนาปะเทดชาดให้ได้รับผินสำเลัดเป้นก้าวๆ.

ท่าน นายกลัดถะมนตี สะเหຼิมไຊ ກົມมะสิด ได้สะแดงถอามขอบใจต่ำถ้ำอวยพอน และ ชืมเชียย่างจิงใจ ของบันดาทูดอาซุน ปะจำ สปป ลาว ที่ได้ให้การช่วยเหลือ และ สะหนับสะหนุน สปป ลาว ตะหลอดไลยะผ่านมา. นายกลัดถะมนตี ยังได้สะแดงถอามชืมเชียต่ำเชียผินงาน ของกองปะชุมปึกสาทาลีอาซุนที่เร็ดหน้าที่เป้นขีอต่ำในการสื่สาน และ ปะสานงาน เพื่อสิ่งเสิมการพ้อพันช่วยเหลือ ทั้งในขอบหลายฝ่าย และ สองฝ่าย และ ละหว่างบันดาปะเทดสะมาชิกอาซุน และ สปป ลาว ให้มับมื้แหน่นแฟ้นยิ่งขึ้น.

พ้อมนี้, ท่านนายกลัดถะมนตี ได้ย้ำถืมว่า สปป ลาว แม่นให้ถอามสำคันต่ำอาซุนในการจัดตั้งปะติ บัดนะโยบายการต่างปะเทด ของ สปป ลาว และเห็นว่า อาซุนเป้นเอทิพาทพื้นสำคัน เพื่อสิ่งเสิมสัน ติพาบ, สะถียนละพาบ, การช่วยเหลือ และ การพัดทะ นาแบบยืนยิ่ง. สปป ลาว จะสืบต่ำ ຂับเคลื่อนบุลิมะสิดการพัดทะนาแห่งชาด และสุมใส่จัดตั้งปะติบัดแผน พัดทะนาเสดถะกิด-สังคิมแห่งชาด 5 ปี ถั้งที 10 (2026-2030) และ การหุดพื้นออกจากสะถานะ พาบปะเทดด้อยพัดทะนาผ่านนะโยบายเสดถะกิดเองะลาดเป้นเจ้าติมเอง.

ในโอกาดนี้, ท่านนายกลัดถะมนตี สะเหຼิมไຊ ກົມมะสิด ยังได้สะแดงถอามชืมเชียต่ำ ฟิลิบปิน ที่ได้ดำเนินการเป้นประทานอาซุนด้วยผินสำเลัดอันจิบงามมาธอดปัดจุบัน และ หวังว่าจะได้เข้าร่วมกองปะชุมสุดยอดอาซุน ถั้งที 49 และ บันดากองปะ ชุมสุดยอดที่ก่ำงอ้อง, ซึ่งจะจัดคึ้นแต่อันที 15-17 พะจิก 2026 ที่มะนิลา ฟิลิบปิน.

พ้อมนี้, สปป ลาว กงมพ้อมสืบต่ำให้การช่วยเหลือ และ สะหนับสะหนุน บินพื้นถานถอามอาดสามาดของติน ต่ำการเป้นประทานอาซุน ของ สิงกะโป ในปี 2027.

โถสะบา

ลิ้งโถสะบา ใน มะหาสาน ลายอัน

ໜังสือพิม PDF ปะจำอัน · จองเป้นลายอัน, ลายอาทิด หื ลายเดือน · หิมงานออกแบบให้ฟรี

WhatsApp 020 5888 6182

ຂ່າວພາຍໃນ · 11:44 ໂມງ · ອ່ານ 17 ຄັ້ງ

ສປປ ລາວ ເຄື່ອນໄຫວດຶງດູດການລົງທຶນໃນທ່າບຸກ ຢູ່ ສ ອາແຊ້ກໄບຊານ ໃນ 5 ຂະແໜງ



ໃນໂອກາດທີ່ ພະນະທ່ານ ທອງລຸນ ສີສຸລິດ, ປະທານປະເທດແຫ່ງ ສປປ ລາວ ເຄື່ອນໄຫວຢ້ຽມຢາມ ທາງການ ທີ່ ສ.ອາແຊ້ກໄບຊານ, ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຮ່ວມກັບ ກະຊວງອຸດສາຫະກຳ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ ລາວ ແລະ ກະຊວງ ເສດຖະກິດ ແຫ່ງ ອາແຊ້ກໄບຊານ ໄດ້ ຈັດກອງປະຊຸມສົ່ງເສີມການລົງທຶນ ລາວ-ອາແຊ້ກໄບຊານ ຂຶ້ນ ທີ່ ນະຄອນຫຼວງ ບາກູ ໃນວັນທີ 14 ຕຸລາ 2026 ເພື່ອເປັນການຊອກຫາໂອກາດໃນການເສີມຂະຫຍາຍການຮ່ວມມືທາງດ້ານການຄ້າ ແລະ ການລົງທຶນ ແລະ ທັງເປັນເວທີໃນການພົບປະແລກປ່ຽນລະຫວ່າງວິສາຫະກິດຂອງ ສອງປະເທດ, ໂດຍມີຜູ້ເຂົ້າຮ່ວມຈາກພາກລັດ ແລະ ວິສາຫະກິດເອກະຊົນທັງ ໝົດ 80 ທ່ານ ຈາກຫຼາຍ ຂະແໜງການ ເປັນຕົ້ນ ພະລັງງານ, ທ່ອງທ່ຽວ, ການເງິນ, ໂລຈິດສະຕິກ, ອຸດ ສາຫະກຳ, ການບໍລິການທີ່ປຶກສາ ແລະ ກໍ່ສ້າງ.

ກອງປະຊຸມໄດ້ຮັບກຽດ ກ່າວມີຄຳ ເຫັນ ໂດຍ ທ່ານ ປອ. ມະໂນທອງ ວິງໄຊ, ຮອງລັດຖະມົນຕີ ກະຊວງ ອຸດສາຫະກຳ ແລະ ການຄ້າ ສປປ ລາວ ແລະ ທ່ານ Anar Akhundov, ຮອງລັດຖະມົນຕີ ກະຊວງເສດຖະກິດ, ສ.ອາແຊ້ກໄບຊານ ໂດຍໄດ້ຢືນຢັນວ່າ ສປປ ລາວ ແລະ ສ.ອາ ແຊ້ກໄບຊານ ມີສາຍພົວພັນທີ່ດີຕະຫຼອດ ໄລຍະ 30 ປີຜ່ານມາ ແລະ ໄດ້ ສະໜັບສະໜຸນເຊິ່ງກັນ ແລະ ກັນ ໃນ ລະດັບພາກພື້ນ ແລະ ສາກົນ ແລະ ເອກະພາບກັນວ່າ 2 ປະເທດ ມີທ່າແຮງທີ່ ສາມາດເສີມຂະຫຍາຍການຮ່ວມມື ທາງການຄ້າ ແລະ ການລົງທຶນ ໃຫ້ຫຼາຍ ຂຶ້ນ ໂດຍອີງໃສ່ທ່າແຮງໄດ້ປຽບຂອງແຕ່ລະ ປະເທດ.

ທ່ານ ປອ. ວັນທະນາ ນໍລິນທາ, ກຳມະການ, ຜູ້ປະຈຳການ, ຫົວໜ້າ ຫ້ອງການ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ໄດ້ນຳສະເໜີ ນະໂຍບາຍ ແລະ ການໂອກາດໃນການ ລົງທຶນຂອງ ສປປ ລາວ ໂດຍໄດ້ຢືນຢັນວ່າ ລັດຖະບານລາວ ສະໜັບສະໜຸນການ ລົງທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດ ແລະ ຖືສຳຄັນໃນການປັບປຸງ ສະພາບແວດລ້ອມໃນການລົງທຶນໃຫ້ມີ ຄວາມສະດວກ, ພ້ອມທັງເຊີນຊວນ ວິສາຫະກິດຂອງ ອາແຊ້ກໄບຊານ ສຶກສາ ການໂອກາດໃນການລົງທຶນຢູ່ ສປປ ລາວ ໃນ 5 ຂະແໜງການຕົ້ນຕໍ ຄື: ການປຸງ ແຕ່ງກະສິກຳທີ່ມີມູນຄ່າສູງ, ການປຸງແຕ່ງ ແຮ່ທາດ (ລັດຖະບານລາວເປີດຮັບການ ລົງທຶນໃນອຸດສາຫະກຳປາຍນ້ຳຂອງ ກິດຈະການແຮ່ທາດ ເພື່ອສ້າງມູນຄ່າເພີ່ມ ຢູ່ພາຍໃນປະເທດ), ນ້ຳມັນ (ສົ່ງອອກ ນ້ຳມັນຈາກ ອາແຊ້ກໄບຊານ ມາ ສປປ ລາວ ແລະ ສຶກສາຄວາມເປັນໄປໄດ້ໃນ ການລົງທຶນສ້າງໂຮງກັ່ນນ້ຳມັນຢູ່ ສປປ ລາວ), ໂລຈິດສະຕິກ ແລະ ການ ທ່ອງທ່ຽວ.

ໃນຕອນທ້າຍ ຍັງໄດ້ມີປຶກສາຫາລື ລະຫວ່າງ ພາກລັດ ກ່ຽວກັບກົນໄກ ແລະ ການໂອກາດໃນການເສີມຂະຫຍາຍການ ຮ່ວມມື ແລະ ແລກປ່ຽນບົດຮຽນກັນໃນ ຕໍ່ໜ້າ, ແລະ ພາກທຸລະກິດ ຂອງສອງ ປະເທດ ໄດ້ພົບປະ ແລະ ປຶກສາຫາລື ກ່ຽວກັບການເສີມຂະຫຍາຍການຮ່ວມມື ກັນທາງທຸລະກິດ ໂດຍສະເພາະ ການຊື້-ຂາຍພະລັງງານ, ການປຸງແຕ່ງແຮ່ທາດ ແລະ ການສ້າງກອງທຶນພັດທະນາພື້ນຖານ ໂຄງລ່າງ.

ຂ່າວພາຍໃນ · 14:59 ໂມງ · ອ່ານ 15 ຄັ້ງ

ປກສ ແຂວງສະອັນນະເຂດ ກວດພົບກາເຟປະສົມສານເສບຕິດ ແລະ ຄໍລາເຈັນ 288 ຊອງ ຢູ່ລົດໂດຍສານ ພ້ອມຜູ້ຖືກຫາ 2 ຄົນ



ປກສ ແຂວງ ສະອັນນະເຂດ ລາຍງານວ່າ: ວັນທີ 13 ຕຸລາ 2026 ເຈົ້າໜ້າທີ່ຕຳຫລວດ ກອງບັນຊາການ ປກສ ແຂວງສະຫວັນນະເຂດ ປະຈຳຢູ່ຈຸດກວດກາໂນນ ສັນ ເມືອງໄຊບຸລີ ໄດ້ກວດກາພາຫະນະ ລົດຕູ້ໂດຍສານ ຍີ່ຫໍ້ ໂຕໂຍຕ້າ ລຸ້ນຮາຍເອັກ ສີຂາວ ໝາຍເລກທະບຽນ ກຣ 9000 ນະຄອນຫລວງວຽງຈັນ, ເຊິ່ງຜູ້ຂັບຂີ່ ຊື່ ທ້າວ ຈັນທະຈອນ ອາຍຸ 22 ປີ ຢູ່ບ້ານດົງດຳດວນ ນະຄອນ ໄກສອນພົມວິຫານ ແຂວງສະຫວັນນະເຂດ ພົບເຫັນ ຖອນດ້າ ລຸ້ນ ແຈັກ ສີ ຂາວ ບໍ່ຕິດປ້າຍ ທະບຽນ 1 ຄັນ, ໂທລະສັບ ຈຳນວນ 3 ເຄື່ອງ.

ຜ່ານການສອບສວນເບື້ອງຕົ້ນຜູ້ ກ່ຽວ ໄດ້ຮັບສາລະພາບວ່າ: ກາເຟ ແລະ ຄໍລາເຈັນ ຈຳນວນດັ່ງກ່າວ, ໄດ້ສັ່ງຊື້ ທາງ ເຟດບຸກ ໃນລາຄາຊ່ອງລະ 330,000ກີບ ຈຸດປະສົງແມ່ນຈະເອົາໄປຂາຍຕໍ່.

ປັດຈຸບັນ, ຄະດີດັ່ງກ່າວ ທາງ ເຈົ້າໜ້າທີ່ວິຊາສະເພາະຍັງຢູ່ໃນການດຳ ເນີນຄະດີຕາມກົດໝາຍ.

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວພາຍໃນ · 15:01 ໂມງ · ອ່ານ 15 ຄັ້ງ

ກອງປະຊຸມ ຄະນະກຳມະການອະໄພຍະໂທດ ລະດັບຊາດ ກ່ຽວກັບການຄົ້ນຄວ້າພິຈາລະນາການໃຫ້ອະໄພຍະໂທດໃຫ້ແກ່ນັກໂທດ ປະຈຳປີ 2026



ໃນຕອນເຊົ້າວັນທີ 16 ຕຸລາ ນີ້, ຢູ່ອົງການໄອຍະການປະຊາຊົນສູງສຸດ ຄະນະກຳມະການອະໄພຍະໂທດ ລະດັບຊາດ ໄດ້ຈັດກອງປະຊຸມຂຶ້ນ ເພື່ອຄົ້ນຄວ້າພິຈາລະນາການສະເໜີຂໍໃຫ້ອະໄພຍະໂທດຫຼຸດຜ່ອນໂທດ ແລະ ການຂໍອະໄພຍະໂທດປ່ອຍຕົວ ແກ່ນັກໂທດ ປະຈຳປີ 2026. ໂດຍພາຍໃຕ້ການເປັນປະທານຂອງ ທ່ານ ຄຳພັນ ພົມມະທັດ ກຳມະການກົມການເມືອງສູນກາງພັກ ຮອງນາຍົກລັດຖະມົນຕີ ລັດຖະມົນຕີກະຊວງຍຸຕິທຳ ປະທານຄະນະກຳມະການອະໄພຍະໂທດ ລະດັບຊາດ, ມີທ່ານ ພົນຈັດຕະວາ ນາງ ລີວົງ ລາວລີ ກຳມະການສູນກາງພັກ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຮອງປະທານຄະນະກຳມະການອະໄພຍະໂທດ ລະດັບຊາດ (ຜູ້ປະຈຳການ), ບັນດາທ່ານຮອງປະທານຄະນະກຳມະການອະໄພຍະໂທດ ລະດັບຊາດ, ພ້ອມດ້ວຍ ຄະນະກຳມະການອະໄພຍະໂທດ ລະດັບຊາດ ແລະ ກອງເລຂາ ຄະນະກຳມະການອະໄພຍະໂທດ ລະດັບຊາດ ທີ່ມາຈາກກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງການຕ່າງປະເທດ, ກະຊວງຍຸຕິທຳ, ຫ້ອງວ່າການສຳນັກງານປະທານປະເທດ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ເຂົ້າຮ່ວມ.

ໃນວາລະກອງປະຊຸມ, ທ່ານ ພົນຈັດຕະວາ ນາງ ລີວົງ ລາວລີ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ໄດ້ລາຍງານຜົນການກວດກາ ແລະ ຄົ້ນຄວ້າພິຈາລະນາການສະເໜີຂໍໃຫ້ອະໄພຍະໂທດຫຼຸດຜ່ອນໂທດ ແລະ ອະໄພຍະໂທດປ່ອຍຕົວ ແກ່ນັກໂທດ ປະຈຳປີ 2026 ຈາກນັ້ນ ທ່ານຮອງນາຍົກລັດຖະມົນຕີ ປະທານຄະນະກຳມະການອະໄພຍະໂທດ ລະດັບຊາດ ໄດ້ມີຄຳເຫັນຕໍ່ກອງປະຊຸມ ຄົ້ນຄວ້າອະໄພຍະໂທດໃຫ້ແກ່ນັກໂທດ ເພື່ອໃຫ້ການໃຫ້ອະໄພຍະໂທດໃຫ້ແກ່ນັກໂທດຖືກຕ້ອງຕາມເງື່ອນໄຂທີ່ກຳນົດໄວ້ຕາມລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 001/ປປທ, ລົງວັນທີ 20 ມິນາ 2018 ທັງເປັນການຮັບປະກັນວ່ານັກໂທດຜູ້ທີ່ໄດ້ຮັບອະໄພຍະໂທດກັບຕົວເປັນຄົນດີແທ້ໆທັງຮັບປະກັນຄວາມໂປ່ງໃສ ແລະ ທາງດ້ານມະນຸດສະທຳ ພ້ອມກັນນີ້ ຜູ້ເຂົ້າຮ່ວມກອງປະຊຸມຍັງໄດ້ພ້ອມກັນກວດກາ, ຄົ້ນຄວ້າ ແລະ ປະກອບຄຳຄິດເຫັນຢ່າງກົງໄປກົງມາ ດ້ວຍຄວາມຮັບຜິດຊອບສູງ ເພື່ອເຮັດໃຫ້ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານໃຫ້ອະໄພຍະໂທດມີປະສິດທິພາບ, ຮັບປະກັນນະໂຍບາຍມະນຸດສະທຳ, ເພື່ອສຶກສາອົບຮົມນັກໂທດໃຫ້ເຫັນໄດ້ແນວທາງນະໂຍບາຍອັນຖືກຕ້ອງເປັນທຳຂອງລັດແຫ່ງ ສປປ ລາວ, ໃນການກໍ່ສ້າງຕົນເອງໃຫ້ກາຍເປັນພົນລະເມືອງດີຂອງຊາດ, ແນໃສ່ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ ເພື່ອສ້າງເງື່ອນໄຂໃຫ້ເຂົາເຈົ້າມີການປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

ໃນໂອກາດດັ່ງກ່າວ, ທ່ານ ຄຳພັນ ພົມມະທັດ ປະທານກອງປະຊຸມ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ທ່ານໄດ້ເນັ້ນໃຫ້ບັນດາທ່ານ ຄະນະກຳມະການອະໄພຍະໂທດ ລະດັບຊາດ, ກອງເລຂາ ຄະນະກຳມະການອະໄພຍະໂທດ ລະດັບຊາດ ເພີ່ມທະວີຄວາມຮັບຜິດຊອບໃນການກວດກາ, ຄົ້ນຄວ້າ ໂດຍອີງໃສ່ກົດໝາຍ, ລັດຖະບັນຍັດ ວ່າດ້ວຍການໃຫ້ອະໄພຍະໂທດ ແລະ ນິຕິກຳທີ່ກ່ຽວຂ້ອງເປັນພື້ນຖານໃນການຄົ້ນຄວ້າພິຈາລະນາ ເພື່ອເຮັດໃຫ້ການສະເໜີຂໍອະໄພຍະໂທດ ໃຫ້ແກ່ນັກໂທດ ຮັບປະກັນຄວາມຖືກຕ້ອງທາງດ້ານມະນຸດສາທຳ, ໂປ່ງໃສ, ທັນຕາມກຳນົດເວລາ ແລະ ຮັບປະກັນຄວາມຍຸຕິທຳໃນສັງຄົມ.

(ຂ່າວ: ອອປສ)

ข่าวพายใน · 14:22 โมง · อ่าน 7 ถั้ง

ກອງປະຊຸມລະດັບສູງຂອງໜ່ວຍງານຄວບຄຸມຢາເສບຕິດ ກັບກຸ່ມບັນດາປະເທດຜູ້ໃຫ້ທຶນ ເພື່ອແກ້ໄຂບັນຫາຢາເສບ ຕິດ ຢູ່ ສປປ ລາວ



ໃນວັນທີ 16 ຕຸລາ 2026, ຫ້ອງການກວດກາ ແລະ ຄວບຄຸມຢາເສບຕິດ ກົມໃຫຍ່ຕຳຫຼວດ ກະຊວງ ປ້ອງກັນຄວາມສະຫງົບ ຮ່ວມກັບ ສະຖານເອກອັກຄະຣາ ຊະທູດ ແຫ່ງ ປະເທດຍີ່ປຸ່ນ ປະຈຳ ສປປ ລາວ ແລະ ອົງການສະ ຫະປະຊາຊາດ ເພື່ອຄວບຄຸມຢາເສບຕິດ ແລະ ຕ້ານອາຊະຍາກຳ ໄດ້ຈັດກອງປະຊຸມລະດັບສູງຂອງໜ່ວຍ ງານຄວບ ຄຸມຢາເສບຕິດກັບກຸ່ມບັນດາປະເທດຜູ້ໃຫ້ທຶນ ເພື່ອແກ້ໄຂບັນຫາຢາເສບຕິດ ຢູ່ ສປປ ລາວ ຄັ້ງທີ 21 ປະ ຈຳປີ 2026 ຂຶ້ນທີ່ນະຄອນຫຼວງວຽງຈັນ, ໂດຍມີ ທ່ານ ພົນຈັດຕະວາ ສາລີ ພຸດທະວົງ ຮອງຫົວໜ້າກົມໃຫຍ່ຕຳ ຫຼວດ, ທ່ານ ທາຊາກະ ທາກຸໂລະ ອັກຄະຣາຊະທູດຍີ່ປຸ່ນ ປະຈຳ ສປປ ລາວ ແລະ ທ່ານ ໄຣເນ ຟັງ ຫົວໜ້າທີມງານ ດ້ານຢາເສບຕິດ ແລະ ສານເຄມີຕັ້ງຕົ້ນ ຫ້ອງການພາກພື້ນ ອົງການ UNODC ປະຈຳອາຊີຕາເວັນອອກສຽງໃຕ້ ແລະ ປາຊີຟິກ, ມີບັນດາທູຕານຸທູດ, ຕາງໜ້າຈາກອົງການຈັດຕັ້ງ ສາກົນ, ຕາງໜ້າຈາກບັນດາກະຊວງ ແລະ ກົມກອງທີ່ ກ່ຽວ ຂ້ອງເຂົ້າຮ່ວມ.

ກອງປະຊຸມ, ໄດ້ຮັບຟັງການລາຍ ງານສະພາບບັນຫາຢາເສບຕິດ ຢູ່ ສປປ ລາວ ແລະ ແຜນວຽກທີ່ເປັນບຸລິມະສິດ ທີ່ ຈະຈັດຕັ້ງປະຕິບັດໃນແຜນງານແຫ່ງຊາດ 2026- 2030, ໄດ້ຮັບຟັງການລາຍງານ ຈາກອົງການ UNODC ກ່ຽວກັບພາບ ລວມສະຖານະການຢາເສບຕິດໃນລະດັບ ໂລກ ແລະ ພາກພື້ນ, ບົດລາຍງານ ຢາ ເສບຕິດໂລກ ປີ 2026 (World Drug Report 2026) ແລະ ບົດ ລາຍງານຢາເສບຕິດສັງເຄາະໃນອາຊີຕາເວັນ ອອກ ແລະ ອາຊີຕາ ເວັນອອກສຽງໃຕ້ (Synthetic Drugs Report),ຈຸ ດ ເດັ່ນຂອງກິດຈະກຳ ແລະ ຜົນງານຂອງ UNODC ໃນ ສປປ ລາວ, ການສະແດງ ຄວາມຄິດເຫັນຈາກບັນດາຄູ່ຮ່ວມງານ ໂດຍຜູ້ແທນລັດຖະບານ, ຄະນະທູຕານຸທູດ ແລະ ພາກສ່ວນອື່ນໆ, ລາຍງານຄວາມຄືບ ໜ້າຂອງກອງປະຊຸມໂຕະມົນ, ການປັບປຸ ງໂຄງສ້າງຄະນະເຮັດວຽກຂອງໜ່ວຍງານ ຄວບຄວາມຢາເສບຕິດ ແລະ ການສົ່ງເສີມ ການຮ່ວມມື.

ກອງປະຊຸມ, ຍັງໄດ້ທົບທວນຄືນ ການຈັດຕັ້ງປະຕິບັດວຽກງານກວດກາ ແລະ ຄວບຄຸມຢາເສບຕິດ ໃນປີຜ່ານມາ ເຊິ່ງປະກອບມີວຽກງານປ້ອງກັນ-ໂຄສະນາ ສຶກສາອົບ ຮົມກ່ຽວກັບຜົນຮ້າຍຂອງຢາ ເສບຕິດ, ວຽກງານປິ່ນປົວ ແລະ ຟື້ນຟູ ສຸຂະພາບຜູ້ຕິດຢາເສບຕິດ, ວຽກງານສະ ກັດກັ້ນ ແລະ ເຝົ້າລະວັງການລັກລອບປູກ ພືດທີ່ມີສານເສບຕິດ (ຝິ່ນ, ກັນຊາ) ຂອງປະຊາຊົນໃນບາງທ້ອງຖິ່ນຢູ່ເຂດພາກ ກາງ ແລະ ພາກໃໝ້, ການປະຕິບັດ ໂຄງການທົດແທນການປູກພືດທີ່ມີສານ ເສບຕິດ, ສະພາບການລັກລອບຊື້ ຂາຍ, ລຳລຽງຂົນສົ່ງຢາເສບຕິດ, ວຽກງານປະຕິ ບັດມາດຕະການທາງດ້ານກົດໝາຍ ແລະ ວຽກງານສຳຄັນອື່ນໆ.

ພ້ອມກັນນັ້ນ, ກອງປະຊຸມ ຍັງໄດ້ ປຶກສາຫາລື ແລະ ແລກປ່ຽນຍົດຮຽນນຳ ກັນເພື່ອຊອກຫາມາດຕະການ ແລະ ວິທີການເໝາະສົມ ເພື່ອແນໃສ່ເຮັດໃຫ້ ການປະຕິບັດແຜນງານແຫ່ງຊາດ 2026-2030 ວ່າດ້ວຍການແກ້ໄຂບັນຫາ ຢາເສບຕິດໃນຕໍ່ໜ້າ ໃຫ້ນັບມື້ໄດ້ຮັບຜົນ ດີ.

ພາບ-ຂ່າວ: ຄຳໂຖ

ข่าวพายใน · 11:53 โมง · อ่าน 6 ถั้ง

สปป ลาว สำเลັดขั้นตอนพื้นถานเข้ำเป้นเป้นสะมาซิกของ CICA



ຂປລ. ວັນທີ 14 ຕຸລາ 2026 ທີ່ ນະຄອນຫລວງ ບາກູ, ສາທາລະນະລັດອາແຊກໄບຊານ, ໃນໄລຍະກອງ ປະຊຸມສຸດຍອດ ກົມໄກການພົວພັນ ແລະ ການສ້າງຄວາມ ໄວ້ເນື້ອເຊື່ອໃຈໃນອາຊີ (CICA) ຄັ້ງທີ 7 (14-15 ຕຸລາ 2026), ທ່ານ ທອງສະຫວັນ ພົມວິຫານ ຮອງນາຍົກ ລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ໄດ້ ເຂົ້າຮ່ວມພິທີລົງນາມ ຮັບຮອງເອົາເອກະສານພື້ນຖານເພື່ອ ເຂົ້າເປັນສະມາຊິກຂອງ ສປປ ລາ ໃນອົງການ CICA ຄື: ຖະແຫລງການ ວ່າດ້ວຍຫລັກການນຳພາຄວາມສຳພັນ ລະຫວ່າງປະເທດສະມາຊິກ (ກັນຍາ 1999) ແລະ ກົດບັດອານມາຕິ (ມິຖຸນາ 2002) ວ່າດ້ວຍຫລັກການ ແຫ່ງຄວາມສະໝີພາບ, ບໍ່ແຊກແຊງກິດຈະການພາຍໃນ, ສັນຕິພາບແລະການຮ່ວມມື ເພື່ອໃຫ້ກອງປະຊຸມສຸດຍອດ ຂອງອົງການ CICA ສາມາດປະກາດຮັບຮອງເອົາ ສປປ ລາວ ເປັນປະເທດສະມາຊິກຢ່າງສົມບຸນໃນວັນທີ 15 ຕຸລາ 2026 (ພາຍຫລັງໄດ້ເຂົ້າຮ່ວມເປັນປະເທດສັງເກດ ການແຕ່ປີ 2017 ເປັນຕົ້ນມາ).

ໃນໂອກາດນີ້, ທ່ານຮອງນາຍົກ ລັດຖະມົນຕີ ໄດ້ສະແດງຄວາມຂອບໃຈ ຢ່າງຈິງໃຈ ຕໍ່ປະທານໝູນ ວຽນ CICA (ສາທາລະນະລັດອາແຊກໄບຊານ), ເລຂາທິການໃຫຍ່, ກອງເລຂາ ແລະ ບັນດາປະເທດສະມາຊິກ CICA ທີ່ໄດ້ໃຫ້ ການສະໜັບສະໜຸນ ແລະ ເປັນ ເອກະພາບຮັບເອົາ ສປປ ລາວ ເຂົ້າຮ່ວມ ເປັນສະມາຊິກຂອງກົນໄກສຳຄັນນີ້. ການ ຕັດສິນໃຈເຂົ້າຮ່ວມ CICA ສະທ້ອນໃຫ້ ເຫັນຄວາມສຳຄັນທີ່ລັດຖະ ບານ ແລະ ປະຊາຊົນລາວ ຕໍ່ສັນຕິພາບ, ຄວາມໝັ້ນຄົງ ແລະ ສະຖຽນລະພາບໃນພາກພື້ນ ໂດຍ ຜ່ານການສົນທະນາ, ການສ້າງຄວາມໄວ້ ເນື້ອເຊື່ອໃຈ ແລະ ການຮ່ວມມືລະຫວ່າງ ປະເທດ. ຫລັກການ ແລະ ຈຸດປະ ສົງ ຂອງ CICA ສອດຄ່ອງກັບນະໂຍບາຍ ການຕ່າງປະເທດອັນສະເໝີຕົ້ນສະເໝີປາຍ ຂອງ ສປປ ລາວ ຄື: “ສັນຕິພາບ, ເອກະລາດ, ມິດຕະພາບແລະການ ຮ່ວມມື” ບົນພື້ນຖານການເຄົາລົບ ອະທິປະໄຕ, ຜົນແຜ່ ດິນອັນຄົບຖ້ວນ, ບໍ່ແຊກແຊງວຽກງານພາຍໃນ ແລະ ການ ແກ້ໄຂຂໍ້ຂັດແຍ່ງດ້ວຍສັນຕິວິທີ.

ທ່ານຮອງນາຍົກລັດຖະມົນຕີ ໄດ້ ກ່າວເນັ້ນວ່າ: ອົງການ CICA ມີບົດບາດ ສຳຄັນໃນການສົ່ງເສີມຄວາມເຂົ້າໃຈ, ການ ຮ່ວມມື, ສ້າງສະພາບແວດລ້ອມທີ່ເອື້ອຍ ອຳນວຍຕໍ່ສັນຕິພາບ, ສະຖຽນລະພາບ, ແກ້ໄຂຂໍ້ຂັດແຍ່ງຢ່າງສັນຕິວິທີ ແລະ ສົ່ງເສີມການພັດທະນາແບບຍືນຍົງໃນທົ່ວ ທະວີບອາຊີ. ການເຂົ້າເປັນສະມາຊິກຄັ້ງນີ້, ຈະເປັນໂອກາດອັນສຳຄັນໃຫ້ ສປປ ລາວ ໄດ້ເສີມຂະຫຍາຍການຮ່ວມມືກັບບັນດາ ປະ ເທດອາຊີໃນຂົງເຂດທີ່ມີຜົນປະໂຫຍດ ຮ່ວມກັນ, ລວມມີການເຊື່ອມຕໍ່, ການ ພັດທະນາແບບຍືນຍົງ, ການຮ່ວມມືດ້ານ ເສດຖະກິດ, ການຄ້າ, ການລົງທຶນ ແລະ ການຮັບມືກັບສິ່ງທ້າທາຍ ດ້ານຄວາມໝັ້ນ ຄົງຮູບແບບໃໝ່. ສປປ ລາວ ພ້ອມແລ້ວ ປະຕິບັດໜ້າທີ່ຢ່າງເຕັມສ່ວນໃນຖານະເປັນ ສະມາຊິກ, ເຂົ້າຮ່ວມກິດຈະ ກຳຕ່າງໆຂອງ CICA ຢ່າງຫ້າວຫັນ ແລະ ຈະເຮັດວຽກ ຮ່ວມກັບບັນດາປະເທດສະມາຊິກ ເພື່ອ ບັນລຸເປົ້າໝາຍຮ່ວມກັນ, ຈະປະກອບ ສ່ວນຢ່າງສ້າງສັນຕາມຄວາມສາມາດຂອງ

ต่ำหน้า 7

ສປປ ລາວ ສຳເລັດຂັ້ນຕອນພິນຖານເຂົ້າເປັນເປັນສະມາຊິກຂອງ... (ຕໍ່ຈາກໜ້າ 6)

ຕົນ ເພື່ອສ້າງຄວາມໄວ້ເນື້ອເຊື່ອໃຈ, ການສຶບທະນາ ແລະ ການຮ່ວມມືເພື່ອສັນຕິພາບ, ສະຖຽນລະພາບ ແລະ ຄວາມຈະເລີນຮຸ່ງເຮືອງຮ່ວມກັນທີ່ເຂັ້ມແຂງຂອງທະວີບອາຊີ. ສປປ ລາວ ເຊື່ອໝັ້ນວ່າການເປັນສະມາຊິກຄັ້ງນີ້ ຈະເປັນໂອກາດອັນສຳຄັນໃນການຂະຫຍາຍການຮ່ວມມືກັບ 29 ປະເທດສະມາຊິກທົ່ວອາຊີ ເພື່ອບັນລຸເປົ້າໝາຍຮ່ວມກັນຄື: ສັນຕິພາບ, ສະຖຽນລະພາບ ແລະ ຄວາມຈະເລີນຮຸ່ງເຮືອງຮ່ວມກັນຂອງທະວີບອາຊີ. ປັດຈຸບັນ CICA ມີ 29 ປະເທດສະມາຊິກ (ລວມ ສປປ ລາວ) ກວມເອົາພື້ນທີ່ ແລະ ປະຊາກອນເກືອບ 90% ຂອງທະວີບອາຊີ.

◆ **ຂ່າວພາຍໃນ** · 09:39 ໂມງ · ອ່ານ 3 ຄັ້ງ

ແຂວງບໍລິຄຳໄຊ ຈູດທຳລາຍຢາເສບຕິດຫຼາຍລາຍການ ເນື່ອງໃນວັນແຫ່ງຊາດຕ້ານຢາເສບຕິດ ຄົບຮອບ 25 ປີ



ພິທີຈູດທຳລາຍຢາເສບຕິດ ເນື່ອງໃນໂອກາດວັນແຫ່ງຊາດຕ້ານຢາເສບຕິດຄົບຮອບ 25 ປີ (12 ຕຸລາ 2001 – 12 ຕຸລາ 2026) ຢູ່ແຂວງບໍລິຄຳໄຊ ໄດ້ຈັດຂຶ້ນເປັນທາງການໃນຕອນເຊົ້າ ວັນທີ 14 ຕຸລາ 2026 ຢູ່ທີ່ສູນບຳບັດ ແລະ ຟື້ນຟູຜູ້ຕິດຢາເສບຕິດໜອງດິງ ເມືອງປາກກະດິງ ແຂວງບໍລິຄຳໄຊ, ໃຫ້ກຽດໂດຍ ທ່ານ ຄຳແຫວນ ປັນຍານຸວົງ ປະທານຄະນະກຳມະການປົກຄອງແຂວງບໍລິຄຳໄຊ ມີສະພາປະຊາຊົນຊົນແຂວງ, ຕາງໜ້າພະແນກການ, ຫ້ອງການອ້ອມຂ້າງແຂວງ ມີຄະນະກຳມະການຄວບຄຸມ ແລະ ຕ້ານຢາເສບຕິດແຂວງ ແລະ ນ້ອງນັກຮຽນ, ຊາວໜຸ່ມ, ເຍົາວະຊົນ ເຂົ້າຮ່ວມ.

ທ່ານ ພິຈອ ກົງຈັນ ໄຊປັນຍາ ຫົວໜ້າກອງບັນຊາການ ປກສ ແຂວງບໍລິຄຳໄຊ ໄດ້ ຕາງໜ້າໃຫ້ຄະນະກຳມະການຄວບຄຸມ ແລະ ຕ້ານຢາເສບຕິດແຂວງ ສະຫຼຸບລາຍງານຜົນການເຄື່ອນໄຫວວຽກງານຕ້ານ ແລະ ສະກັດກັ້ນຢາເສບຕິດໃນໄລຍະ 1 ປີຜ່ານມາ ສະພາບການຊື້-ຂາຍ ແລະ ລະບາດຂອງຢາເສບຕິດໃນທ້ອໂລກ ແລະ ພາກພື້ນ ຍັງຄົງຜັນແປຢ່າງສັບສົນ ແລະ ສ້າງຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ. ສຳລັບແຂວງບໍລິຄຳໄຊ ຍັງຖືກກຸ່ມຄົນບໍ່ຫວັງດີໃຊ້ເປັນເສັ້ນທາງຂົນສົ່ງ ແລະ ມີກຸ່ມຄົນບໍ່ດີລັກລອບປຸກຝັ່ນ-ກັນຊາ ຢູ່ເຂດພູດອຍ ພ້ອມທັງມີກຸ່ມໄວໜຸ່ມ, ນັກຮຽນ-ນັກສຶກສາ ຕົກເປັນທາດຂອງຢາເສບຕິດ. ຜ່ານການຈັດຕັ້ງປະຕິບັດວາລະແຫ່ງຊາດຢ່າງເປັນເຈົ້າການ, ເຈົ້າໜ້າທີ່ ປກສ ແຂວງບໍລິຄຳໄຊ ສາມາດຍາດໄດ້ຜົນງານອັນຟົ້ນເດັ່ນ ໂດຍສະເພາະ ຄະດີທີ່ສານຕັດສິນໃຊ້ໄດ້ເດັດຂາດແລ້ວ (161 ເລື່ອງ, ນັກໂທດ 211 ຄົນ) ສານເສບຕິດຂອງກາງທີ່ນຳມາທຳລາຍປະຈຳປີ 2026 ປະກອບມີ: ຢາບ້າ 6,350,798 ເມັດ, ຄັນຊາແຫ້ງ: 3,194 ກິໂລກຼາມ, ຢາດີໄອ (DI): 67,266 ກວດ,ໃບກະທ່ອມ 2,059 ກິໂລກຼາມ, ນ້ຳກະທ່ອມສຳເລັດຮູບ 360 ຖຸກ ,ຢາໄອສ໌: 45 ກິໂລກຼາມ, ຄໍລາເຈັນປະສົມສານເສບຕິດ: 314 ຂວດ, ຢາສູບໄຟຟ້າ: 163 ອັນ, ເຄຕາມິນ (ຢາເຄ): 01 ກິໂລກຼາມ, ສານເຄມີ ແລະ ແປ້ງຜະລິດຢາບ້າ: ແປ້ງຜະລິດຢາບ້າ 51 ກິໂລກຼາມ, ຄາເຟອິນ 52 ກິໂລກຼາມ, ແປ້ງຂາວ 108 ກິໂລກຼາມ, ແປ້ງຝຸ່ນ 124.5 ກິໂລກຼາມ, ສີປະສົມ ແລະ ນ້ຳຢາແຕ່ງກິ່ນຈຳນວນໜຶ່ງ.

ສັງລວມແລ້ວ ຢາບ້າ ຍັງຄົງເປັນອັນດັບໜຶ່ງທີ່ແຜ່ລະບາດໜັກກວມເອົາ 70% ໂດຍສະເພາະໃນກຸ່ມຊາວໜຸ່ມ, ໄວໜຸ່ມ, ເຍົາວະຊົນ ແລະ ກຳມະກອນ. ສ່ວນອີກ 30% ແມ່ນການມົ້ວສຸມສິ່ງເສບຕິດປະເພດໃໝ່ ເຊັ່ນ: ຢາເຄ, ນ້ຳກະທ່ອມ, ກາເຟ ແລະ ຄໍລາເຈັນປະສົມສານເສບຕິດ ທີ່ກຳລັງແຜ່ລາມຕາມຮ້ານອາຫານ, ຮ້ານບັນເທີງ ແລະ ຮ້ານຄາລາໂອເກະ. ຕໍ່ກັບບັນຫາຫຍໍ້ທໍ້ດັ່ງກ່າວ, ທາງເຈົ້າໜ້າທີ່ ແລະ ພາກສ່ວນທີ່ກ່ຽວຂ້ອງ ໄດ້ວາງມາດຕະການຢ່າງເດັດຂາດໃນຕໍ່ໜ້າ ໂດຍຈະສືບຕໍ່ຜັນຂະຫຍາຍວາລະແຫ່ງຊາດ, ສ້າງບ້ານ ແລະ ຄອບຄົວປອດຢາເສບຕິດ, ໂຄສະນາເຜີຍແຜ່ຜົນຮ້າຍຂອງຢາເສບຕິດໃຫ້ເຂົ້າເຖິງທຸກກຸ່ມເປົ້າໝາຍ ພ້ອມທັງຮຽກຮ້ອງໃຫ້ທຸກພາກສ່ວນໃນສັງຄົມ, ປະຊາຊົນ ແລະ ນັກລະກິດຮ່ວມມືກັນເປັນເຈົ້າການ ເພື່ອປົກປ້ອງລຸ້ນຫຼານໃຫ້ຫຼຸດພົ້ນຈາກໄພພິບັດຢາເສບຕິດຢ່າງຮອບດ້ານ.

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສຶດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 14 ໃນສະບັບນີ້

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ
ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

◆ ສາລະໜ້າຮູ້ · 10:15 ໂມງ · ອ່ານ 12 ຄັ້ງ

ສະຖານທູດລາວ ປະຈຳ ສ ເກົາຫຼີ ຮ่วมกับ HUFS ทบทอน 10 ปีการ สอนพาสาลาว พ้อม ขุกยู้การร่วมมือด้านการศึกสา



ໃນວັນທີ 14 ຕຸລາຜ่านมานี้, ที่ สะถานเอกอักคะลัดถะทูด แห่ง สปป ลาว ประจำ ส เกาหลี, ท่าน นาง ไกมะนี อ๋ลละบุน, เอกอักคะลัดถะทูด แห่ง สปป ลาว ประจำ ส เกาหลี, ได้พบปะกับ ท่าน นาง กึนเฮ ชิน (Dr. Keunhye Shin), หัวหน้าคะนะฝ่ายกิดจะการนักสึกสา (Dean of Student Affairs) ของมะหาวิทะยาไลฮันกุกพาสาต่างประเทด (Hankuk University of Foreign Studies: HUFS), เนื่องในโอกาดถึบธอบ 10 ปี การสอนพาสาลาว. การพบปะถั้งนี้มีจุดประสึง เพื่อแลก เปลี่ยน คำเห็น, ทึบทอนผึนสำเล็ดของการธฺวม-การสอนพาสาลาวใน ส เกาหลี ตะหลอด 10 ปีผ่านมา, พ้อมทั้งปึกสาหาลือ หึดทางการร่วมมือในต่หน้า. ในโอกาดนี้, ท่าน นาง ไกมะนี อ๋ลละบุน ได้สะแดงถอามขึมเขียต่ผึนสำเล็ดในการจัดการธฺวม-การสอนพาสาลาว ใน ส เกาหลี ถึบธอบ 10 ปี ซึ่งเป็นขีดหมายสำคัน ในการสึ่งเสิมสายพ้อพันมิดตะพาบลาว-เกาหลี. การธฺวมพาสาลาว บ่พฺงแต่ ช่วยให้นักสึกสาเกาหลี สามาดสื่สานด้อยพาสาลาวได้เท่านั้น, แต่ยังช่วย เสิมสร้างถอามเข้าใจ ต่อัดทะนะทำ, ธึดถองปะเพนี และสังคิมลาวหฺายขึ้น. พ้อมนี้, ท่านยังได้สะแดงถอาม ขอบใจ ต่คะนะอาจาน และ ผู้กฺ่วอ้องทุกฝ่าย ที่ได้ทุ่มเทแธงกายแธงใจในการพัดทะนาการธฺวม-การสอน พาสาลาว ให้ขะหยาย ถือย่างต่เนื่อง ซึ่งเป็นพื้นถานสำคันในการสึ่งเสิมการแลกปฺ่ยน ละหว่าฺงชาวหนุ่มของสองฺ ประเทด. ท่านยังสะแดงถอามหวังว่า การร่วมมือกับสะถาบันการสึกสาของลาว จะได้ธับการขะหยายถือติ่มอีก ในอะนาถึด และ นำมาซึ่งผึนสำเล็ดที่เป็นธุบปะทำด้านการสึกสา.

ท่าน นาง กึนเฮ ชิน ได้เน้นว่า: นับแต่การเปิดสอนพาสาลาวในปี 2016, ถอามร่วมมือ ละหว่าฺง อาจาน ลาว และ อาจานเกาหลี ได้มีส่วนสำคันในการพัดทะนาหฺักสูด, ปึ้มแบบธฺวม และ ขะหยายโอกาด การธฺวมรู้พาสาลาวให้แก่นักสึกสา. HUFS จะสืบต่สึ่งเสิมการธฺวมพาสาลาว และ ขุกยู้ให้นักสึกสานำใช้ถอามรู้ด้านพาสาเพื่อสึกสาถ้นถว้า และ เข้าใจปะเทดลาวให้เล็กเซิ้งยิ่งขึ้น.

HUFS เป็นหนึ่งในสะถาบันการสึกสาชั้นนำของ ส เกาหลี ด้านพาสาต่างปะเทด และ การสึกสาพาทพื้น โดยเปิดสอนพาสาต่างปะเทดเถิง 45 พาสา. การธฺวมพาสาลาวอยู่ HUFS เล็มต้นในปี 2016 และ ปัดจุบัน มีการสอนพาสา และ อัดทะนะทำลาวลอม 3 อิชาต่พาทธฺวม, พายใต้พาทอิชาไทสึกสา และ พาทอิชาการแปฺ และ การแปปาทเป่าพาสาไทย. ในไลยะปี 2016-2026, มีติอเลกการลิ้ทะบวนธฺวมลอม 783 เที่อถึม.

นับแต่ปี 2022, การสอนพาสาลาวได้ธับการสะพับสะพุนพายใต้โถงการ ของ ลัดถะ บานเกาหลี เพื่อสึ่งเสิมการธฺวม-การสอนพาสาต่างปะเทดที่มีถอามสำคันทางยุดทะสาด. โถงการ ดั่งก่าวได้ช่วยพัดทะนาหฺักสูดมาดตะถาน และ ปึ้มแบบธฺวมพาสาลาวตั้งแต่ละดับ A1 หา B2. นอกจากนั้น, ยังมีการจัดสอบเสิงมาดตะถานเพื่อปะเมินละดับถอามสามาด ด้านพาสาลาวเป็นปะ จำทุกปี. ผึนสำเล็ดดั่งก่าวส่วนหนึ่งเกิดจากการร่วมมือของอาจานลาว และ เกาหลี. ท่าน นาง อิไลพอน สีมสะพอน, หัวหน้าคะนะอิชาเสดถะสาด และ การท่องทฺ่ยว, มะหาวิทะยาไลสุพานุอิง, เป็นอาจานที่สอนพาสาลาวถึนทำอิดของ HUFS ในปี 2016 และยังสืบต่ร่วมมือด้านการถ้นถว้า, การธฺวบธฺวงปึ้มแบบธฺวม และ การให้คำปึกสาด้านการสอน. นอกจากนั้น, ท่าน นาง ยิอสอน ทำมะจัก จากพาทอิชาพาสา-อัดทะนะทำลาว, คะนะอักสอนสาด, มะหาวิทะยาไลแห่งชาด กำได้มี ส่วนร่วมในการให้คำปึกสาด้านการสอน. ปัดจุบัน, ท่าน นาง ซูอึน กิม (Dr. Sueun Kim) เป็นอาจานผู้ ธับผิดชอบการสอนพาสาลาวอยู่ HUFS.

นอกจากการธฺวม-การสอนในห้องธฺวมแล้ว, HUFS และ สะถานทูดลาวประจำ ส เกาหลี ยังได้ร่วมกันจัดกิดจะกำหฺายธุบแบบ เพื่อสึ่งเสิมการธฺวมรู้พาสา และ อัดทะนะทำของสองประเทด. กิดจะกำดั่งก่าว ปะกอบมี การสอนพาสาเกาหลีให้แก่พะนักงานสะถานทูด และ ชาวลาวใน ส เกาหลี ทั้งในธุบแบบออนลาย และ แบบเซิ้งหน้า; การจัดโถงการฝึกงานออนลายยู่สะถานทูด สำลับนักสึกส สาที่ธฺวมพาสาลาว; การบันยายพิเสด โดยเอกอักคะลัดถะทูด; การสะแดงฟ้อนลาว; และ การปะ กอดอิดีโอพาสาลาว. นอกจากนั้น, โถงการ Summer School ที่ มะหาวิทะยาไลสุพานุอิง ยังเป็นอีกหนึ่งกิดจะกำสำคัน ที่เปิดโอกาด ให้นักสึกสาเกาหลี ได้ธฺวมพาสาลาว และ แลกปฺ่ยน ปะสิบการกับนักสึกสาลาว และ กิดจะกำอื่นๆอีกจำนอนหฺาย. กิดจะกำเถ้านี้ บ่พฺงแต่ช่วยเพิ่มพูนถอามรู้ และ ทักสะด้านพาสาของนักสึกสาเท่านั้น, แต่ยังช่วยเสิมสร้างถอามเข้าใจ, มิดตะพาบ และ การแลกปฺ่ยนละหว่าฺงปะชาชินลาว-เกาหลี ให้แพ้นแฟ้นยิ่งขึ้น.

ในโอกาดดฺวกันนี้, สะถานเอกอักคะลัดถะทูด แห่ง สปป ลาว ประจำ ส เกาหลี ได้มอบใบ กฺวดติถุน ให้แก่ ท่าน นาง ซูอึน กิม (Dr. Sueun Kim), อาจานผู้ธับผิดชอบการสอนพาสา, สังคิม และ วัดทะนะทำลาวยู่ HUFS, เพื่อเป็นการย้องยั และ สะแดงถอามขอบใจต่การอุทิดตึน และ การปะกอบส่วนอันมีถุนค่าในการพัดทะนาการธฺวม-การสอน พาสาลาวใน ส เกาหลี.

การเปิดการธฺวม-การสอนพาสาลาว ของ HUFS ในไลยะผ่านมา สะท้อนให้เห็นบิดบาด สำคันของการสึกสาพาสาสาดในการเชื่อมสานถอามเข้าใจละหว่าฺงปะชาชินด้อยกัน, ทั้งสร้างโอกาดในการแลกปฺ่ยนถอามรู้, สืบต่เสิมสร้างสายพ้อพันมิดตะพาบ และ การร่วมมืออันดิละหว่าฺง สปป ลาว และ ส เกาหลี. (ข่าว: ภตห)

ຂ່າວຕ່າງປະເທດ · 10:51 ໂມງ · ອ່ານ 18 ຄັ້ງ

ເກີດເຫດກາດຍິງຢູ່ໂຮງຮຽນປະຖົມສະຫະລັດ ເສຍຊີວິດຢ່າງໜ້ອຍ 4 ຄົນ ໃນນັ້ນເປັນນັກຮຽນ 3 ຄົນ



ເກີດເຫດຍິງກາດຢູ່ໂຮງຮຽນປະຖົມໃນລັດອໍຣິກອນຂອງສະຫະລັດ ມີລາຍງານຜູ້ເສຍຊີວິດ 4 ລາຍ ເປັນເດັກນ້ອຍ 3 ຄົນ ແລະ ຜູ້ໃຫຍ່ 1 ຄົນ ສ່ວນຜູ້ຕ້ອງສົງໄສເສຍຊີວິດຢູ່ໃນທີ່ເກີດເຫດ ຕຳຫຼວດກຳລັງເລ່ງກວດສອບຂໍ້ເທັດຈິງຮ່ວມກັບ ເອຟບີໄອ (FBI).

ເກີດເຫດຍິງກາດຂຶ້ນພາຍໃນ ໂຮງຮຽນປະຖົມຊິລເວີເຣລ (Silver Rail Elementary School) ໃນ ເມືອງເບນ, ລັດອໍຣິກອນຂອງສະຫະລັດ ເມື່ອວັນທີ 15 ຕຸລາ ຕາມເວລາທ້ອງຖິ່ນ ມີລາຍງານຜູ້ເສຍຊີວິດ 4 ລາຍ ປະກອບມີ ເດັກນ້ອຍ 3 ຄົນ ແລະ ຜູ້ໃຫຍ່ 1 ຄົນ ຂະນະທີ່ຜູ້ຕ້ອງສົງໄສທີ່ກໍ່ເຫດມີອາຍຸ ປະມານ 15-16 ປີ ກໍເສຍຊີວິດດ້ວຍ ເຊັ່ນກັນ ຢ່າງໃດກໍຕາມ ຕົວເລກຜູ້ເສຍ ຊີວິດຍັງເປັນຂໍ້ມູນເບື້ອງຕົ້ນ ແລະ ອາດ ມີການປ່ຽນແປງໄດ້.

ຕຳຫຼວດເມືອງເບນເປີດເຜີຍວ່າ ໄດ້ ຮັບແຈ້ງເຫດຄັ້ງທຳອິດເມື່ອເວລາປະມານ 13:00 ໂມງ ຕາມເວລາທ້ອງຖິ່ນ ຫຼັງຈາກ ມີລາຍງານວ່າຊາຍຄົນໜຶ່ງໃຊ້ອາວຸດປືນຍິງ ໃສ່ລົດຍົນຢູ່ບໍລິເວນໂຮງຮຽນ ກ່ອນທີ່ຈະ ມີຜູ້ໂທແຈ້ງເຫດສຸກເສີນເພີ່ມເຕີມວ່າ ຜູ້ກໍ່ ເຫດໄດ້ເຂົ້າໄປໃນອາຄານຮຽນແລ້ວເປີດ ສາກຍິງ.

ເມື່ອເຈົ້າໜ້າທີ່ຕຳຫຼວດໄປເຖິງ ກໍ ພົບຜູ້ຕ້ອງສົງໄສຖືກຍິງເສຍຊີວິດຢູ່ພາຍໃນ ອາຄານໂຮງຮຽນ ແຕ່ໃນຂະນະນີ້ຍັງບໍ່ທັນ ຊາບແນ່ຊັດວ່າແມ່ນໃຜເປັນຜູ້ຍິງຜູ້ຕ້ອງ ສົງໄສ ໂດຍມີລາຍງານຜູ້ໄດ້ຮັບບາດເຈັບ ຫຼາຍຄົນ ແລະ ຢ່າງໜ້ອຍ 2 ຄົນຖືກນຳ ຕົວສົ່ງໂຮງໝໍ ສ່ວນອາການນັ້ນຍັງບໍ່ມີການ ເປີດເຜີຍຢ່າງຈະແຈ້ງ.

ຫຼັງຈາກເກີດເຫດ ເຈົ້າໜ້າທີ່ໄດ້ເລ່ງ ອົບພະຍົບຜູ້ທີ່ຢູ່ພາຍໃນໂຮງຮຽນອອກ ຈາກອາຄານ ໂດຍກວດສອບຫ້ອງຮຽນ ເທື່ອລະຫ້ອງ ຂະນະທີ່ສຳນັກງານສືບສວນ ກາງສະຫະລັດ ຫຼື ເອຟບີໄອ (FBI) ໄດ້ ສົ່ງເຈົ້າໜ້າທີ່ເຂົ້າຊ່ວຍເຫຼືອໜ່ວຍງານ ທ້ອງຖິ່ນໃນການສືບສວນ-ສອບສວນ ເຫດການໃນຄັ້ງນີ້.

ທາງດ້ານເຂດການສຶກສາເບນ-ລາ ໄພນ໌ ໄດ້ປະກາດປິດໂຮງຮຽນທຸກແຫ່ງໃນ ສັງກັດໃນວັນສຸກ ເພື່ອຮັບມືກັບເຫດການ ສະເທືອນຂວັນດັ່ງກ່າວ ໂດຍເຈົ້າໜ້າທີ່ຍັງ ຄົງເລ່ງສືບສວນຫາສາເຫດ ແລະ ລາຍ ລະອຽດເພີ່ມເຕີມຂອງການຍິງກາດໃນຄັ้ง ນີ້.

ທີ່ມາ: BBC

ໂຄສະນາ
ລົງໂຄສະນາ ໃນ ມະຫາສານ ລາຍວັນ
ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ
WhatsApp 020 5888 6182

ໂຄສະນາ
ລົງໂຄສະນາ ໃນ ມະຫາສານ ລາຍວັນ
ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ
WhatsApp 020 5888 6182

ข่าวต่างประเทศ · 20:33 ໂມງ · ອ່ານ 14 ຄັ້ງ

เหตถีมปรุบกันในงานบุนทางสาสะหนาที่อินเดย เสยชีวิดย่างหน้อย 17 ถีม บาดเจับ 25 ถีม



เกิดเหตฝูงชินแออัดจินปรุบกันในงานบุนทางสาสะหนาธินดู ที่เมืองโกลกาตา (Kolkata) ลัดเบงกานตาเอ้นตีก ทางตาเอ้นออกของประเทดอินเดย ในอันที่ 17 ตุลา 2026 สั่งผินให้มีผู้เสยชีวิดย่างหน้อย 17 ถีม และบาดเจับอีก 25 ถีม ตามการานลายงานของสื่ท้องถิ่น และเจ้าหน้าที่.

เหตการนเกิดขึ้นบໍລິเวนปะตูทางออกของสะถานที่จัดงานบุน Durga Puja ในเขด Girish Park ของเมืองโกลกาตา ในขะนะที่มีฝนตกหนัก และมีผู้ถีมจำนอนหลายพะยายามออกจากสะถานที่พ้อมกัน จินเกิดถวามแออัด และการดันกันของฝูงชิน.

Durga Puja เป้นงานบุนสำคันปะจำปีของชาวธินดู ในลัดเบงกานตาเอ้นตีก โดยมีการานจัดสร้างสาลาชั่วคาวเพื่อปะดิดสะถานธุบเทบทีดา Durga และดึงดูดผู้ถีมจำนอนหลายให้เข้าร่อมงานตะหลอดหลายมื้.

ตามลายงาน ผู้บาดเจับทั้งหมดได้รับการช่อยเหลือ และนำส่งไปโธงหมໍเพื่อรับการปิ่นป๋อ. ขะนะดงอกัน สำนักงานของนายกลัดถะมินตี Narendra Modi ได้ปะกาดเงินช่อยเหลือ 200,000 รูปี หรือปะมาน 2,106 โดลา สะหะลัด ให้แก่ถอบถัวของผู้เสยชีวิด และ 50,000 รูปี หรือปะมาน 527 โดลา ต่ผู้บาดเจับแต่ละถีม.

เหตการถั้งนี้เป้นอีกถั้งที่สะท้อนให้เห็นเถิงถวามส่งด้านถวามปอดไพในการานจัดงานที่มีผู้ถีมเข้าร่อมจำนอนหลาย โดยสะเพาะการานถอบถุมฝูงชิน และการานจัดละบบทางเข้า-ทางออกให้ปอดไพ.

ที่มา: Reuters และสื่ข่าวต่างประเทด

ข่าวต่างประเทศ · 14:31 ໂມງ · ອ່ານ 8 ຄັ້ງ

จีน-สปป เก๋าหลี เปิดข๋อข้ามแม่น้ำยาลู ซุกยู้การนค้าสองประเทด



สำนักข่าว ซิ่นธวา ของ สปจีน, เมื่อบ่ดินมานี้, ท่าน เหม่าหนิง (Mao Ning) โถสีก กะซวงการนต่างปะเทดจีน เปิดเผิยว่า: ข๋อที่ข้ามแม่น้ำยาลู เซิ่งเป้น แม่น้ำชายแดน ละหว่าง จีน กับ สปป เก๋าหลี (DPRK) มีกำนิด เปิดนำใช้ ย่างเป้นทางการ ในอันที่ 15 ตุลานี้, เพื่อจะช่อย ซุกยู้ การนค้า และการนแลกป่ยน ละหว่าง ปะชาชิน ของ สองประเทด ให้ได้รับปะสิดทิพาบดีขึ้น.

จีน และ สปป เก๋าหลี เป้นเพื่อนบ้าน ใก้ชิดที่ เชื่อมโยงกัน ด้อยพูผา และ แม่น้ำ, ข๋อแซ่งใหม่นี้จึ่งถือเป้น พื้นถาน โถงล่าง สำคัน ในการนซุกยู้ สิ่งเสิมการนเชื่อมโยง ละหว่าง สองประเทด เชิ่งคาดว่า จะช่อย สิ่งเสิมการนค้าสองสื่น (ทะวิพาถี) และ การนแลกป่ยน ละหว่าง ปะชาชิน พ้อมทั้ง ช่อยยิกละดับถวามเป้นอู่ ของ ปะชาชิน ทั้งสองฝ่าย ให้ดีขึ้น

ลาถาน้ำมัน, เงิน, คำ, หอย และ อากาด — สืดทุกมื้
เบิ่งติอเลกล่าสุด ที่ mahaxan.com/today · หน้า 14 ในสะบับนี้

ຂ່າວຕ່າງປະເທດ · 11:44 ໂມງ · ອ່ານ 8 ຄັ້ງ

ປກສ ແຂວງສະຫວັນນະເຂດ ກັກຕົວ 11 ຄົນ ລັກລອບຂຸດຄົ້ນ-ຊື້ຂາຍແຮ່ທາດເຖື່ອນ



ເຈົ້າໜ້າ ປກສ ແຂວງສະຫວັນນະເຂດ ສົມທົບກັບ ເຈົ້າໜ້າທີ່ ປກສ ເມືອງວິລະບູລີ ເຂົ້າກັກຕົວພວກລັກລອບ ຂຸດຄົ້ນ-ຊື້ຂາຍ ຊຸກເຊື່ອງແຮ່ທາດທີ່ບໍ່ຖືກຕ້ອງຕາມລະບຽບ ກົດໝາຍ ຈຳນວນ11 ຄົນ, ຍິງ 01 ຄົນ, ພ້ອມເຄື່ອງຂອງ ກາງຈຳນວນຫຼາຍລາຍການ.

ໃນ ຕົ້ນເດືອນ ຕຸລາ 2026ນີ້, ເຈົ້າໜ້າທີ່ວິຊາ ສະເພາະ ກອງບັນຊາການ ປກສ ແຂວງ ໄດ້ສົມທົບກັບ ປກສ ເມືອງວິລະບູລີ ເຂົ້າໄປກວດຄົ້ນໂຮງງານ ປຸງແຕ່ງໄມ້ ຄຸນມິໄຊ ຕັ້ງຢູ່ເຂດ ບ້ານຫ້ວຍຊ້ອນ ເມືອງວິລະບູລີ, ຜ່ານ ການກວດຄົ້ນສາມາດ ກັກຕົວ ຜູ້ຕ້ອງສົງໃສ ໃນສະຖານຊຸກ ເຊື່ອງຊື້ - ຂາຍຊັບ ປະເພດ ແຮ່ທາດ ຈຳນວນ 11 ຄົນ, ຍິງ 01 ຄົນ ໃນນັ້ນ; ສັນຊາດຈີນ 1 ຄົນ, ສັນຊາດ ຫວຽດນາມ 4 ຄົນ, ຍິງ 1 ຄົນ, ແລະ ສັນຊາດລາວ 06 ຄົນ.

ຍຶດອາຍັດຊັບເຄື່ອງຂອງກາງ ປະເພດແຮ່ທາດ ຫີນຂອງບໍລິສັດ ແລະ ອຸປະກອນຕ່າງໆທີ່ນຳໃຊ້ເຂົ້າໃນການສະ ກັດເອົາແຮ່ທາດຄຳ ເຊັ່ງມີ: ລົດຈັກ 04 ຄັນ ໃນນັ້ນມີລົດຈັກດັດແປງສະພາບ (ລົດ ຕະແກ່ງ) 02 ຄັນ, ຈັກປັ່ນໄຟ 01 ເຄື່ອງ, ຈັກບົດແຮ່ 03 ເຄື່ອງ, ໄດດຸດນ້ຳ 01 ເຄື່ອງ, ເຄື່ອງບົດຫີນ ແຮ່ທາດ 04 ເຄື່ອງ, ຢາບ້າ 66 ເມັດ, ໄດໂປມນ້ຳ 04 ໜ່ວຍ, ໄດເປ່ົາລົມ 01 ໜ່ວຍ, ຕູ້ຈອດ 01 ໜ່ວຍ, ເຄື່ອງຫຼອມຂະໜາດນ້ອຍ 01 ໜ່ວຍ, ເຄື່ອງອັດຄວາມຮ້ອນ ສະແຕດ ເລດ 01 ໜ່ວຍ, ເຕົ້າລົມ 02 ໜ່ວຍ ແລະ ອຸປະກອນອື່ນໆອີກຫຼາຍລາຍການ, ແຮ່ທາດ ປະເພດຫີນ ຈຳນວນ 115 ໂຕນ, ແຮ່ທາດອາສິດຜ່ານການບົມ ແຍກທາດ 01 ຄ້ຳ 40 ໂຕນ, ສານເຄມີ ສຸພີລິດອາສິດ 5 ຖຸກ, ສານເຄມີ ໄຮໂດ ແລັນ 07 ຖຸກ, ສານເຄມີ ກາກບອນໄດ ຮອດຊາຍ 05 ເປ໋ົາ ຈຳນວນ 125 ກິໂລ, ສານເຄມີ ຢາງໂພທີລິນ 07 ເປ໋ົາ, ສານ ເຄມີ ແອັດໂມນຽມໂຄລາຍ 05 ເປ໋ົາ ຈຳ ນວນ 125 ກິໂລແລະ ສັງກະສີແຍກຄຳ 60 ກິໂລ.

ແລະຕໍ່ມາໃນວັນທີ 10 ຕຸລາ ປີ 2026 ນີ້, ເຈົ້າໜ້າທີ່ວິຊາສະເພາະ ກອງ ບັນຊາການ ປກສ ແຂວງ ສົມທົບກັບ ພາກສ່ວນກ່ຽວຂ້ອງ ເຂົ້າກວດຄົ້ນ ໂຮງງານລາວຊຸຍວນ ພາລາສະຕິກ ແລະ ປຸງແຕ່ງຢາງພາລາ ເຊັ່ງຕັ້ງຢູ່ ບ້ານ ນາຈາລິດ, ນະຄອນໄກສອນ, ແຂວງ ສະຫວັນນະ ເຂດ, ໄດ້ມີການ ລັກລອບ ຂຸ້ົ-ຂາຍ ຊຸກ ເຊື່ອງແຮ່ທາດທີ່ບໍ່ຖືກຕ້ອງຕາມກົດໝາຍ, ຜ່ານການກວດຄົ້ນໂຮງງານດັ່ງກ່າວ, ພົບ ເຫັນແຮ່ທາດ ທີ່ບົດແລ້ວຈຳນວນ 45 ຖົງ ບິກແບ໊ັກ, 03 ຖົງບິກແບ໊ັກທີ່ຍັງບໍ່ທັນບົດ ແລະ 90 ກະສອບນ້ອຍທີ່ຍັງບໍ່ທັນບົດ ນ້ຳໜັກ ປະມານ 58 ໂຕນ, ເຄື່ອງຈັກທີ່ ນຳໃຊ້ເຂົ້າໃນການບົດແຮ່ທາດຈຳນວນ 05 ເຄື່ອງ ແລະ ລົດກະບະ ສີ່ປະຕູ 1 ຄັນ ພ້ອມທັງກັກຕົວ ຜູ້ຕ້ອງສົງໃສ ໃນສະຖານ ຊຸກເຊື່ອງຊື້ - ຂາຍຊັບ ຈຳນວນ 2 ຄົນ ຍິງ 1 ຄົນ ມາທຳການສອບສວນ ແລະ ດຳເນີນຄະດີຕາມລະບຽບກົດໝາຍ

ວິທະຍຸກະຈາຍສຽງ ແຂວງ ສະຫວັນນະເຂດ

ຂ່າວຕ່າງປະເທດ · 22:11 ໂມງ · ອ່ານ 7 ຄັ້ງ

ຈີນສະເໜີຄວບຄຸມການສົ່ງອອກ 12 ເຕັກໂນໂລຊີຜະລິດແຜງໂຊລາເຊວ ອ້າງເຫດຜົນຄວາມໝັ້ນຄົງແຫ່ງຊາດ



ຈີນສະເໜີມາດຕະການຄວບຄຸມການສົ່ງອອກ 12 ເຕັກໂນໂລຊີທີ່ໃຊ້ໃນການຜະລິດອຸປະກອນພະລັງງານແສງ ຕາເວັນ ໂດຍອ້າງເຫດຜົນດ້ານຄວາມໝັ້ນຄົງແຫ່ງຊາດ ທ່າມກາງການປັບປຸງກົດລະບຽບການສົ່ງອອກເຕັກໂນໂລຊີ ທີ່ຄອບຄຸມທັງປັນຍາປະດິດ (AI) ແລະເຕັກໂນໂລຊີຊີວະ ພາບ.

ກະຊວງພານິດຂອງຈີນລະບຸວ່າ ເຕັກໂນໂລຊີດ້ານ ໂຊລາເຊວ ຊຶ່ງເປັນອຸປະກອນປ່ຽນແສງຕາເວັນເປັນ ພະລັງງານໄຟຟ້າ ກຳລັງຖືກນຳໄປໃຊ້ຫຼາຍຂຶ້ນໃນຂະແໜງ ການທີ່ມີຄວາມອ່ອນໄຫວ ເຊັ່ນ ອຸດສາຫະກຳອາວະກາດ ແລະການປ້ອງກັນປະເທດ ຈຶ່ງຈຳເປັນຕ້ອງມີການກຳກັບ ດູແລທີ່ເຂັ້ມງວດຂຶ້ນ.

ມາດຕະການທີ່ສະເໜີມາອາດສົ່ງຜົນຕໍ່ບໍລິສັດຕ່າງ ປະເທດທີ່ຕ້ອງການພັດທະນາການຜະລິດແຜງໂຊລາເຊວ ພາຍໃນປະເທດຂອງຕົນ. ກ່ອນໜ້ານີ້ ສຳນັກຂ່າວ Reuters ເຄີຍລາຍງານວ່າ ເຈົ້າໜ້າທີ່ຈີນໄດ້ຫາລືກັບຜູ້ ຜະລິດກ່ຽວກັບການຈຳກັດການສົ່ງອອກ ເຕັກໂນໂລຊີຜະລິດແຜງໂຊລາເຊວຂັ້ນສູງ ເຊິ່ງອາດກະທົບຕໍ່ແຜນການຂອງບໍລິສັດ ສະຫະລັດ ເຊັ່ນ Tesla ທີ່ຕ້ອງການ ຂະຫຍາຍການຜະລິດພາຍໃນສະຫະລັດ.

ນອກຈາກນີ້ ຈີນຍັງເຄີຍຈຳກັດການ ສົ່ງອອກເຕັກໂນໂລຊີຜະລິດໂຊລາເຊວໄປ ຍັງອິນເດຍ ໃນຂະນະທີ່ອິນເດຍກຳລັງເລັ່ງ ສ້າງອຸດສາຫະກຳພາຍໃນປະເທດ ເພື່ອຫຼຸດ ການເພິ່ງພາເຕັກໂນໂລຊີຈາກຈີນ.

ຕາມຂໍ້ສະເໜີ ເຕັກໂນໂລຊີບາງ ປະເພດອາດຖືກຫ້າມສົ່ງອອກ ລວມທັງ ເຕັກໂນໂລຊີຜະລິດແຜ່ນຊິລິຄອນບາງໆ ທີ່ ໃຊ້ເປັນວັດສະດຸພື້ນຖານໃນການຜະລິດ ໂຊລາເຊວ, ເຕັກໂນໂລຊີໂຊລາເຊວເປີ ຣອຟສະໄກ໌ (Perovskite), ໂຊລາ ເຊວແບບຊ້ອນຊັ້ນ (Tandem Solar Cells) ແລະເຕັກໂນໂລຊີຜະລິດຊິລິຄອນ ບໍລິສຸດລະດັບອຸດສາຫະກຳ.

ເຕັກໂນໂລຊີ Perovskite ຖືກ ຄາດຫວັງວ່າຈະຊ່ວຍເພີ່ມປະສິດທິພາບໃນ ການປ່ຽນແສງເປັນໄຟຟ້າ. ສ່ວນໂຊລາເຊວ ແບບ Tandem ໃຊ້ຊັ້ນວັດສະດຸ Perovskite ຮ່ວມກັບຊິລິຄອນ ເພື່ອ ຮັບແສງໄດ້ກວ້າງຂຶ້ນ ແລະອາດຜະລິດ ໄຟຟ້າໄດ້ມີປະສິດທິພາບສູງກວ່າ ເທັກໂນໂລຊີບາງປະເພດໃນປັດຈຸບັນ.

ຂະນະດຽວກັນ ຈີນຍັງສະເໜີ ຈຳກັດການສົ່ງອອກເຕັກໂນໂລຊີຜະລິດໂຊ ລາເຊວປະສິດທິພາບສູງບາງປະເພດ ເຊັ່ນ TOPCon, HJT ແລະ XBC ແຕ່ບໍ່ໄດ້ ສະເໜີຫ້າມສົ່ງອອກທັ້ງໝົດ.

ກະຊວງພານິດຂອງຈີນລະບຸວ່າ ຜູ້ ສົ່ງອອກຕ້ອງລົງທະບຽນການໂອນຖ່າຍ ເຕັກໂນໂລຊີໄປຕ່າງປະເທດບາງປະເພດ ໃນລະຫວ່າງທີ່ຂໍ້ສະເໜີກຳລັງຢູ່ໃນຂັ້ນ ຕອນພິຈາລະນາ. ການເປີດຮັບຄຳຄິດ ເຫັນສາທາລະນະຈະສິ້ນສຸດໃນວັນທີ 15 ພະຈິກ 2026.

ຕໍ່ໜ້າ 12

ຈີນສະເໜີຄວບຄຸມການສົ່ງອອກ 12 ເຄັກໂນໂລຊີຜະລິດແຜງໂ... (ຕໍ່ຈາກໜ້າ 11)

ສຳລັບລາວ ຄວາມເຄື່ອນໄຫວຄັ້ງນີ້ເປັນປັດໄຈທີ່ຄວນຕິດຕາມ ເນື່ອງຈາກຈີນເປັນແຫຼ່ງສຳຄັນຂອງອຸປະກອນໂຊລາເຊວ ແລະເຕັກໂນໂລຊີພະລັງງານແສງຕາເວັນໃນຕະຫຼາດໂລກ. ຫາກມາດຕະການຖືກນຳມາໃຊ້ຈິງ ຜົນກະທົບອາດເກີດຂຶ້ນຕໍ່ການຕ່າຍທອດເຕັກໂນໂລຊີ, ການຂະຫຍາຍກຳລັງການຜະລິດໃນປະເທດອື່ນ ແລະການແຂ່ງຂັນໃນອຸດສາຫະກຳພະລັງງານສະອາດ.

ຢ່າງໃດກໍຕາມ ຂໍ້ສະເໜີດັ່ງກ່າວຍັງບໍ່ແມ່ນການຫ້າມສົ່ງອອກຂັ້ນສຸດທ້າຍທຸກລາຍການ ແລະຜົນກະທົບຕໍ່ລາຄາແຜງໂຊລາເຊວ ຫຼືໂຄງການພະລັງງານໃນລາວ ຍັງຂຶ້ນກັບລາຍລະອຽດຂອງກົດລະບຽບທີ່ຈະຖືກປະກາດໃຊ້ໃນອະນາຄົດ.

ຂ່າວຕ່າງປະເທດ · 14:11 ໂມງ · ອ່ານ 4 ຄັ້ງ

ເກີດເຫດລົດເມຟຸ່ງຕຳລົດໄຟຂົນສົ່ງສິນຄ້າໜ້າອຸໂມງຊ່ອງແຄບອັງກິດ ເຈັບ 19 ຄົນ



ເກີດອຸບັດເຫດລົດເມນ້ອຍຕຳກັບລົດໄຟຂົນສົ່ງສິນຄ້າທີ່ກຳລັງເຄື່ອນໂຕອອກຈາກຊານຊາລາສຳລັບຂົນຍ້າຍລົດຍົນ ບໍລິເວນທາງເຂົ້າອຸໂມງຊ່ອງແຄບອັງກິດຝັ່ງຝຣັ່ງ ໃກ້ເມືອງກາເລສ໌ (Calais) ເຮັດໃຫ້ມີຜູ້ໄດ້ຮັບບາດເຈັບ 19 ຄົນ ໃນນັ້ນມີ 2 ຄົນອາການສາຫັດ ແລະ ຖືກສົ່ງໄປປິ່ນປົວຢູ່ເມືອງລີລ (Lille). ເຈົ້າໜ້າທີ່ລະບຸວ່າບໍ່ມີຜູ້ໄດ້ຮັບບາດເຈັບລາຍໃດຢູ່ໃນພາຫະສ່ຽງຕໍ່ການເສຍຊີວິດ ຂະນະທີ່ບໍລິການລົດໄຟຢູໂຣສະຕາຣ໌ (Eurostar) ບໍ່ໄດ້ຮັບຜົນກະທົບ ແຕ່ລົດໄຟຮັບສົ່ງຍານພາຫະນະຍັງຄົງຫຼ້າຊ້າປະມານໜຶ່ງຊົ່ວໂມງ.

ເຈົ້າໜ້າທີ່ຝຣັ່ງເປີດເຜີຍວ່າ ມີຜູ້ໄດ້ຮັບບາດເຈັບ 19 ຄົນ ຫຼັງຈາກລົດເມນ້ອຍຕຳກັບລົດໄຟຂົນສົ່ງສິນຄ້າທີ່ກຳລັງເຄື່ອນໂຕອອກຈາກຊານຊາລາບໍລິເວນທາງເຂົ້າອຸໂມງຊ່ອງແຄບອັງກິດຝັ່ງຝຣັ່ງ ໃນເມືອງໂກແກລລ໌ (Coquelles) ໃກ້ເມືອງກາເລສ໌ ເມື່ອເວລາປະມານ 19:27 ໂມງ ຂອງວັນທີ 15 ຕຸລາ ຕາມເວລາທ້ອງຖິ່ນຂອງຝຣັ່ງ ຫຼື ກົງກັບເວລາ 18:27 ໂມງ ຢູ່ອັງກິດ.

ລົດເມນ້ອຍດັ່ງກ່າວໄດ້ບັນທຸກຄົນຂັບລົດບັນທຸກສິນຄ້າທີ່ກຳລັງກຽມຂຶ້ນລົດໄຟຮັບສົ່ງຍານພາຫະນະ ເລ ຊັດເທິລ (Le Shuttle) ເພື່ອເດີນທາງຂ້າມຊ່ອງແຄບອັງກິດ ໂດຍເກີດເຫດຂະນະທີ່ລົດໄຟຂະບວນໜຶ່ງກຳລັງເຄື່ອນໂຕອອກຈາກຊານຊາລາ ຂະນະທີ່ລົດໄຟອີກຂະບວນຈອດຢູ່ເພື່ອຂົນຍ້າຍລົດບັນທຸກສິນຄ້າກ່ອນອອກເດີນທາງຂ້າມຊ່ອງແຄບ.

ອາກາຕ ກູຣີ ເຈົ້າໜ້າທີ່ຝ່າຍປົກຄອງລະດັບຮອງປະຈຳແຂວງປາດກາເລສ໌ (Pas-de-Calais) ກ່າວວ່າ ສາເຫດທີ່ລົດເມນ້ອຍຟຸ່ງຕຳລົດໄຟຂະນະກຳລັງອອກຈາກຊານຊາລານັ້ນຍັງບໍ່ທັນຊາບແນ່ຊັດ ພ້ອມທັງລະບຸວ່າ ນີ້ເປັນອຸບັດເຫດໃນລັກສະນະດັ່ງກ່າວຄັ້ງທຳອິດທີ່ເກີດຂຶ້ນຢູ່ຊານຊາລາສຳລັບຂົນຍ້າຍຍານພາຫະນະຂອງອຸໂມງຢູໂຣທັນເນລ (Eurotunnel).

ກູຣີກ່າວວ່າ ລົດເມນ້ອຍບໍ່ໄດ້ພົກຂວ້ຳ ແຕ່ແຮງກະແທກຈາກການຕຳເຮັດໃຫ້ຜູ້ໂດຍສານໄດ້ຮັບບາດເຈັບ ໂດຍຜູ້ບາດເຈັບທັງໝົດເປັນຜູ້ຊາຍ ແລະ ມີສັນຊາດຕ່າງກັນ ສ່ວນໃຫຍ່ເປັນຄົນຂັບລົດບັນທຸກສິນຄ້າທີ່ກຳລັງກຽມເດີນທາງດ້ວຍບໍລິການ Le Shuttle ທັ້ງນີ້ ຄົນຂັບລົດເມນ້ອຍເປັນພະນັກງານຂອງຢູໂຣທັນເນລ.

ໃນຈຳນວນຜູ້ໄດ້ຮັບບາດເຈັບ 19 ຄົນ ມີ 2 ຄົນຢູ່ໃນອາການສາຫັດ ແລະ ຖືກນຳຕົວສົ່ງໂ运行ໝໃນເມືອງລີລດ້ວຍເຮລິຄອບເຕີ ສ່ວນອີກ 17 ຄົນໄດ້ຮັບການປິ່ນປົວຢູ່ໂ运行ໝຫຼາຍແຫ່ງໃນພື້ນທີ່ໃກ້ຄຽງ ຢ່າງໃດກໍຕາມ ເຈົ້າໜ້າທີ່ຢືນຢັນວ່າບໍ່ມີຜູ້ໄດ້ຮັບບາດເຈັບລາຍໃດຢູ່ໃນພາຫະສ່ຽງຕໍ່ການເສຍຊີວິດ.

ລາຍງານຈາກສື່ທ້ອງຖິ່ນຝຣັ່ງ La Voix du Nord ລະບຸວ່າ ຜູ້ບາດເຈັບ 8 ຄົນໄດ້ຮັບບາດເຈັບເລັກນ້ອຍ ຂະນະທີ່ອີກ 9 ຄົນຍັງຢູ່ລະຫວ່າງການກວດປະເມີນອາການຢູ່ຈຸດເກີດເຫດ. ພາບທີ່ເຜີຍແຜ່ໂດຍສື່ດັ່ງກ່າວສະແດງໃຫ້ເຫັນລົດເມນ້ອຍໄດ້ຮັບຄວາມເສຍຫາຍຢ່າງໜັກບໍລິເວນດ້ານໜ້າ ແລະ ດ້ານຂ້າງຈອດຢູ່ຂ້າງລົດໄຟ ໂດຍມີເຈົ້າໜ້າທີ່ກູ້ໄພ ແລະ ໜ່ວຍສຸກເສີນເຂົ້າຊ່ວຍເຫຼືອຜູ້ບາດເຈັບ.

ກູຣີຢືນຢັນວ່າ ການຈະລາຈອນທາງລົດໄຟສຳລັບຂົນສົ່ງສິນຄ້າ ແລະ ບໍລິການຜູ້ໂດຍສານຂອງຢູໂຣສະຕາຣ໌ບໍ່ໄດ້ຮັບຜົນກະທົບຈາກອຸບັດເຫດຄັ້ງນີ້ ເຖິງແມ່ນວ່າມີການລະງັບການເດີນລົດຊົ່ວຄາວເພື່ອເປີດທາງໃຫ້ໜ່ວຍສຸກເສີນເຂົ້າປະຕິບັດງານ ກ່ອນທີ່ສະຖານະການຈະກັບເຂົ້າມາສູ່ພາວະປົກກະຕິ.

ຢ່າງໃດກໍຕາມ ບໍລິການ Le Shuttle ເຊິ່ງຂົນສົ່ງຍານພາຫະນະລະຫວ່າງເມືອງກາເລສ໌ຂອງຝຣັ່ງ ກັບເມືອງໂຟລກ໌ສະໂຕນ (Folkestone) ໃນມິນທິນເຄນຕ໌ຂອງອັງກິດ ຍັງຄົງຜະເຊີນຄວາມຫຼ້າຊ້າປະມານໜຶ່ງຊົ່ວໂມງຫຼັງເກີດເຫດ.

ດ້ານບໍລິສັດຢູໂຣສະຕາຣ໌ອອກຖະແຫຼງການວ່າ ອຸບັດເຫດເກີດຂຶ້ນຫ່າງຈາກອຸໂມງຊ່ອງແຄບອັງກິດຫຼາຍກິໂລແມັດ ແລະ ບໍ່ມີຜົນກະທົບຕໍ່ລົດໄຟຢູໂຣສະຕາຣ໌ທີ່ໃຫ້ບໍລິການລະຫວ່າງກຸ່ງລອນດອນກັບຈຸດໝາຍປາຍທາງຕ່າງໆໃນຢູໂຣບ ໂດຍລົດໄຟທຸກຂະບວນຍັງຄົງໃຫ້ບໍລິການຕາມກຳນົດເວລາ.

ອຸໂມງຊ່ອງແຄບອັງກິດທອດໂຕຢູ່ກ້ອງທະເລ ເຊື່ອມລະຫວ່າງເມືອງໂຟລກ໌ສະໂຕນໃນອັງກິດ ກັບ ເມືອງໂໂກແກລລ໌ໃນຝຣັ່ງ ໂດຍມີບໍລິການລົດໄຟຫຼັກ 3 ປະເພດ ໄດ້ແກ່: ລົດໄຟໂດຍສານຢູໂຣສະຕາຣ໌, ລົດໄຟຂົນສົ່ງສິນຄ້າ ແລະ Le Shuttle ເຊິ່ງໃຊ້ຂົນສົ່ງຍານພາຫະນະລະຫວ່າງສອງປະເທດ.

ທີ່ມາ: Sky News

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ໂຄສະນາ


EMERGING DIGITAL SOLUTIONS
ແນວຄິດ → ອອກແບບ → ເປີດໃຊ້ງານ
ຮັບອອກແບບ ແລະ ພັດທະນາ ເວັບໄຊທ์ · ແອັບ · ລະບົບທຸລະກິດ
ท่านมีแนวคิด?
พวกเราช่วยสร้างให้เป็นจริง
ບໍ່ວ່າທ່ານຢາກເຮັດລະບົບຫຍັງ , ພວກເຮົາຊ່ວຍໃຫ້ຄຳປຶກສາ ແລະ ສ້າງໃຫ້ເປັນຈິງໄດ້
ອໍເດີໃໝ່ #1024 ຈາກແອັບ
app.huanlao.la/dashboard
ເຮືອນລາວ
ພາບລວມ
ອໍເດີ
ເມນູ
ລູກຄ້າ
ລາຍງານ
ສາງສິນຄ້າ
ພາບລວມມື້ນີ້
25 ຕ.ລ. 2026
+ ເພີ່ມເມນູ
ยอดขายมื้นี้
₭ 4.250.000
▲ 12% จากมื้วาน
อໍเดิ
86
จากแอับ 54 · ซัาร้าน 32
ลูกค้าใหม่
12
ยอดขาย 7 มื้
ยอดขาย 7 มื้
ยอดขาย 7 มื้

ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ

ສະໜັບສະໜຸນໂດຍ [ແບຣນຂອງທ່ານ] · ພື້ນທີ່ນີ້ວ່າງ — ໜ້າຂໍ້ມູນທີ່ຄົນເປີດເບິ່ງທຸກມື້ WhatsApp 020 5888 6182

ລາຄານ້ຳມັນ 18 ແຂວງ

ກີບ/ລິດ · ມີຜົນ 22/10/2026

ແຂວງ	ແອັດຊັ່ງ 95	ທຳມະດາ 91	ກາຊວນ
ນະຄອນຫຼວງວຽງຈັນ	**▼ 40,230**	**▼ 34,490**	**▼ 34,040**
ແຂວງວຽງຈັນ	▼ 40,230	▼ 34,490	▼ 34,040
ຜົ້ງສາລີ	▼ 41,220	▼ 35,480	▼ 35,030
ຫຼວງນ້ຳທາ	▼ 40,720	▼ 34,990	▼ 34,530
ອຸດົມໄຊ	▼ 40,900	▼ 35,160	▼ 34,710
ບໍ່ແກ້ວ	▼ 40,330	▼ 34,590	▼ 34,140
ຫຼວງພະບາງ	▼ 40,740	▼ 35,000	▼ 34,550
ຫົວພັນ	▼ 40,740	▼ 35,000	▼ 34,550
ໄຊຍະບູລີ	▼ 40,550	▼ 34,820	▼ 34,370
ຊຽງຂວາງ	▼ 40,430	▼ 34,680	▼ 34,230
ໄຊສົມບຸນ	▼ 40,650	▼ 34,910	▼ 34,470
ບໍລິຄຳໄຊ	▼ 40,280	34,540	▼ 34,090
ຄຳມ່ວນ	▼ 40,260	▼ 34,520	–
ສະຫວັນນະເຂດ	▼ 40,260	▼ 34,520	▼ 34,070
ສາລະວັນ	▼ 40,510	▼ 34,780	▼ 34,330
ເຊກອງ	▼ 40,510	▼ 34,770	▼ 34,330
ຈຳປາສັກ	▼ 40,290	▼ 34,550	▼ 34,100
ອັດຕະປື	▼ 40,560	▼ 34,820	▼ 34,370

ແຫຼ່ງ: ລາຍການລາຄາ ລັດວິສາຫະກິດນ້ຳມັນເຊື້ອໄຟລາວ · mahaxan.com/today/fuel · ▲ ຂຶ້ນ ▼ ລົງ ທຽບກັບລາຄາກ່ອນ (17/09)

ປະຕິທິນ

ວັນສຳຄັນ ທີ່ໃກ້ມາເຖິງ

19/10		ວັນພຣະ
26/10		ວັນພຣະ · ວັນບຸນອອກພັນສາ
27/10		ວັນບຸນຊ່ວງເຮືອ ນະຄອນຫຼວງວຽງຈັນ
03/11		ວັນພຣະ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍອັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍອັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ອັດຕາແລກປ່ຽນ

ກີບ · BCEL 23/10/2026

ສະກຸນເງິນ	ຊື້ (ເງິນສົດ)	ຂາຍ
USD ໂດລາ ສະຫະລັດ	▲ 22,277	▲ 22,623
THB ບາດ ໄທ	▼ 669.57	▼ 682.50
CNY ຢວນ ຈີນ	▲ 3,327	▲ 3,392
EUR ເອີໂຣ	▲ 25,011	▲ 25,511
VND ດົ່ງ ຫວຽດນາມ	0.86	0.87
JPY ເຢັນ ຍີ່ປຸ່ນ	▲ 141.88	▲ 144.56
SGD ໂດລາ ສິງກະໂປ	▲ 17,081	▲ 17,762
GBP ປອນ ອັງກິດ	▲ 29,780	▲ 30,372

ສະເລ່ຍທະນາຄານ (ທຫລ): USD ຊື້ 22,398 · ຂາຍ 22,621 · ▲ ຂຶ້ນ ▼ ລົງ ທຽບກັບມື້ກ່ອນ

ລາຄາຄຳ

ກີບ · ຂາຍ

ຄຳແທ່ງ 1 ບາດ

44,750,000

▼ 60,000

ຄຳແທ່ງ 99.99% · 1 ກຣາມ

2,981,600

▼ 40,000

ອັບເດດ 25/10 17:00 · mahaxan.com/today/gold

ຫວຍພັດທະນາ

ງວດ 181

ອອກວັນທີ 23/10/2026

740111

ງວດ 180 · 22/10	278077
ງວດ 179 · 21/10	435208
ງວດ 178 · 20/10	697767
ງວດ 177 · 19/10	046331

ພະຍາກອນອາກາດ

ວັນຈັນ 19 ຕຸລາ 2026

ເມືອງ	ຕ່ຳ–ສູງ	ສະພາບ
ວຽງຈັນ	23.5–30.9°C	ເມກບາງສ່ວນ
ຫຼວງພະບາງ	24.4–29.7°C	ເມກບາງສ່ວນ
ໂພນສະຫວັນ	19.4–27.5°C	ມີຝົນ
ຊຳເໜືອ	19.8–26.6°C	ມີຝົນ
ສະຫວັນນະເຂດ	23.3–32.3°C	ມີຝົນ
ປາກເຊ	24.2–30.7°C	ແຈ່ມໃສ

ແຫຼ່ງ: MET Norway · ຂໍ້ມູນສົດ: mahaxan.com/today

ຕົວເລກປ່ຽນທຸກມື້ — ເບິ່ງສົດ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ ອັບເດດສົດ ທີ່ mahaxan.com/today

ແຈ້ງການ


ແຈ້ງການມອດໄຟ ວັນທີ 17,18/10/2026 ໃນຂົງເຂດບ້ານ ດົງປ່າແຫຼບ,ໜອງບົວທອງ,ຮ່ອງຄ້າ,ດອນແດງ,ໜອງທາ,ຫ້ວຍຫົງ ເມືອງ ຈັນທະບູລີ ນະຄອນຫຼວງວຽງຈັນ



ແຈ້ງການມອດໄຟ ວັນທີ 17,18/10/2026 ໃນຂົງເຂດບ້ານ ດົງປ່າແຫຼບ,ໜອງບົວທອງ,ຮ່ອງຄ້າ,ດອນແດງ,ໜອງທາ,ຫ້ວຍຫົງ ເມືອງ ຈັນທະບູລີ ນະຄອນຫຼວງວຽງຈັນ ລາຍລະອຽດດັ່ງນີ້:

ແຈ້ງການ

ແຈ້ງການມອດໄຟ ວັນທີ 18/10/2026 ໃນຂົງເຂດບ້ານ ໂພນທັນ,ບ້ານເມືອງນ້ອຍ ເມືອງ ໄຊເສດຖາ ນະຄອນຫຼວງວຽງຈັນ



ແຈ້ງການມອດໄຟ ວັນທີ 18/10/2026 ໃນຂົງເຂດບ້ານ ໂພນທັນ,ບ້ານເມືອງນ້ອຍ ເມືອງ ໄຊເສດຖາ ນະຄອນຫຼວງວຽງຈັນ ລາຍລະອຽດດັ່ງນີ້:

ກິລາ · 15:49 ໂມງ · ອ່ານ 12 ຄັ້ງ

ອັບເດດ! ສິ່ງອຳນວຍຄວາມສະດວກ ສະໜາມກິລາເຈົ້າອານຸວົງແຫ່ງໃໝ່ ພ້ອມບັນຈຸຜູ້ຊົມໄດ້ 2,767 ບ່ອນນັ່ງ



ສະໜາມກິລາເຈົ້າອານຸວົງແຫ່ງໃໝ່ ໄດ້ຮັບການອອກແບບ ແລະ ພັດທະນາຂຶ້ນມາເພື່ອຮອງຮັບກິດຈະກຳກິລາຕາມມາດຕະຖານສາກົນ, ກິລາຄົນພິການ (Para-sports), ກິລາສຳລັບທຸກຄົນ (Universal sports) ລວມເຖິງງານວັດທະນະທຳ ແລະ ກິດຈະກຳຕ່າງໆຂອງຊຸມຊົນ.

ຂະນະນີ້ ສິ່ງອຳນວຍຄວາມສະດວກ ແລະ ໂຄງສ້າງພື້ນຖານຕ່າງໆ ພາຍໃນສະໜາມແມ່ນມີຄວາມພ້ອມຢ່າງເຕັມຮູບແບບ ດັ່ງນີ້:

1. ສະໜາມແຂ່ງຂັນ ແລະ ລະບົບແລ່ນ-ລານມາດຕະຖານສາກົນ

ເດີ່ນກິລາ: ປູດ້ວຍຫຍ້າທຳມະຊາດ ມາດຕະຖານສາກົນ ຮອງຮັບທັງເດີ່ນເຕະບານ (ຂະໜາດ 105m × 68m) ແລະ ເດີ່ນລັກບີ້ (ຂະໜາດ 94m × 68m).

ລູ່ວິ່ງແລ່ນ-ລານ: ເດີ່ນແລ່ນ 8 ເລນ ໄລຍະທາງ 400 ແມັດ.

ກິລາປະເພດລານ: ຮອງຮັບການແຂ່ງຂັນຫຼາຍປະເພດ ເປັນຕົ້ນແມ່ນ ກິລາໂດດໄກ (Long jump), ກິລາໂດດສູງ (High jump) ແລະ ກິລາແກວ່ງຄ້ອນ (Throwing).

2. ອັດທະຈັນ ແລະ ຄວາມຈຸຜູ້ຊົມ

ສະໜາມແຫ່ງນີ້ສາມາດບັນຈຸຜູ້ຊົມໄດ້ທັງໝົດ 2,767 ບ່ອນນັ່ງ ໂດຍແບ່ງອອກເປັນ:

ອັດທະຈັນຫຼັກ (Main stand): 1,327 ບ່ອນນັ່ງ.

ອັດທະຈັນຝັ່ງກົງກັນຂ້າມ (Back stand): 1,440 ບ່ອນນັ່ງ.

ໂຊນ VIP: ບ່ອນນັ່ງສະເພາະສຳລັບແຂກກິດຕິມະສັກ ຢູ່ບໍລິເວນຊັ້ນ 3.

3. ສິ່ງອຳນວຍຄວາມສະດວກ ແລະ ເຕັກໂນໂລຊີທັນສະໄໝ

ໂຄງສ້າງເພື່ອທຸກຄົນ (Accessibility): ມີການຈັດສັນບ່ອນນັ່ງສະເພາະສຳລັບຜູ້ນັ່ງລໍ້ເລື່ອນ (Wheelchair) ແລະ ຜູ້ຕິດຕາມ ເພື່ອໃຫ້ຜູ້ພິການສາມາດເຂົ້າເຖິງ ແລະ ຮ່ວມຊົມການແຂ່ງຂັນໄດ້ຢ່າງສະດວກສະບາຍ.

ຈໍສະແດງຜົນ LED: ຕິດຕັ້ງຈໍ LED ຂະໜາດໃຫຍ່ ເພື່ອສະແດງຜົນການແຂ່ງຂັນ, ຄະແນນ ແລະ ຂໍ້ມູນຕ່າງໆ ໃນລະຫວ່າງການຈັດກິດຈະກຳ.

ລະບົບໄຟສ່ອງສະຫວ່າງ (Floodlighting): ລະບົບສະປອດໄລ້ສ່ອງສະຫວ່າງທີ່ມີຄວາມເຂັ້ມຂອງແສງສະເລ່ຍທົ່ວສະໜາມເຖິງ 750 ລັກ (Lux) ຮອງຮັບການແຂ່ງຂັນໃນຊ່ວງຄ່ຳຄືນໄດ້ເປັນຢ່າງດີ.

ສະໜາມກິລາເຈົ້າອານຸວົງແຫ່ງໃໝ່ ນີ້ ບໍ່ພຽງແຕ່ເປັນສະຖານທີ່ສຳລັບການແຂ່ງຂັນກິລາລະດັບສາກົນເທົ່ານັ້ນ ແຕ່ຍັງເປັນສູນລວມກິດຈະກຳ, ການສຶກສາ ແລະ ງານວັດທະນະທຳ ທີ່ຈະສ້າງຜົນປະໂຫຍດໃຫ້ແກ່ຊຸມຊົນ ແລະ ສັງຄົມຢ່າງທົ່ວເຖິງ.

#ສະໜາມກິລາເຈົ້າອານຸວົງ #ສະໜາມກິລາແຫ່ງໃໝ່ #ກິລາລາວ #ສິ່ງອຳນວຍຄວາມສະດວກ

ໂຄສະນາ

ເຂົ້າເຖິງຜູ້ອ່ານຄົນລາວ ທຸກເຊົ້າ

ໜ້າຫຼັງ ແມ່ນໜ້າທີ່ເຫັນທຸກຄັ້ງທີ່ປິດໜັງສືພິມ. ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ.

ເບິ່ງລາຄາ: mahaxan.com/media-kit

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ມະຫາສານ ລາຍວັນ ຈັດພິມໂດຍ ມະຫາສານ (mahaxan.com) · 302/3B ຊັ້ນ 3 ອາຄານວຽງວັນ, ຖະໜົນບໍລິຈັນ, ນະຄອນຫຼວງວຽງຈັນ · info@mahaxan.com · WhatsApp +856 20 5888 6182
ຂ່າວໃນສະບັບນີ້ ເຜີຍແຜ່ໃນ mahaxan.com ວັນສຸກ 16 – ວັນອາທິດ 18 ຕຸລາ 2026. ສຳເນົາ PDF ນີ້ໃຫ້ໝຸ່ນໄດ້ຟຣີ ໂດຍບໍ່ດັດແກ້ເນື້ອໃນ.